# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-04 ກໍລະກົດ 2022
ປີທີ 11
ສະບັບທີ 856


## ຊົມເຊີຍວັນສ້າງຕັ້ງສະຫະພັນລັດຖະສະພາສາກົນ (IPU)




ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະສະຫະພັນລັດຖະສະພາສາກົນ (IPU) ຂອງສະພາແຫ່ງຊາດ ແຫ່ງ ສປປລາວ ກ່າວຊົມເຊີຍວັນລັດຖະສະພາສາກົນ ໃນວັນທີ 30 ມິຖຸນາ 2022 ທີ່ສະພາແຫ່ງຊາດລາວ.

ໃນນາມປະທານສະພາແຫ່ງຊາດ ແລະ ປະທານຄະນະສະຫະພັນລັດຖະສະພາສາກົນ (IPU) ຂອງສະພາແຫ່ງຊາດ ແຫ່ງ ສປປລາວ, ຂ້າພະເຈົ້າ ຂໍສະແດງຄວາມອວຍພອນ ແລະ ຊົມເຊີຍວັນລັດຖະສະພາສາກົນ ເຊິ່ງເປັນວັນທີ່ມີຄວາມໝາຍສຳຄັນ ຂອງລະບົບລັດຖະສະພາໃນທົ່ວໂລກ ແລະ ເປັນວັນດຽວກັນກັບການສ້າງຕັ້ງສະຫະພັນລັດຖະສະພາສາກົນ (IPU) ວັນທີ 30 ມິຖຸນາ 1889. ມາຮອດປັດຈຸບັນ ຄົບຮອບ 133 ປີ. ສະຫະພັນລັດຖະສະພາສາກົນ (IPU) ມີລັດຖະສະພາທີ່ເປັນສະມາຊິກທັງໝົດ 178 ປະເທດ ແລະ 14 ອົງການສະມາຊິກທີ່ເປັນພາຄີ.

ວັນລັດຖະສະພາສາກົນ ໄດ້ຖືກຮັບຮອງເອົາ ໃນກອງປະຊຸມສະຫະພັນລັດຖະສະພາສາກົນ ຄັ້ງທີ 129 ທີ່ນະຄອນເຈເນວາ, ປະເທດສະວິດ

ອ່ານຕໍ່ໜ້າ 6

## ສສຊ ສືບຕໍ່ພິຈາລະນາ ກົດໝາຍສະບັບປັບປຸງ ຈຳນວນ 3 ສະບັບ



(ສພຊ) ໃນລະຫວ່າງວັນທີ 29 ມິຖຸນາ-1 ກໍລະກົດ 2022 ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຍັງເປັນວາລະສືບຕໍ່ພິຈາລະບັນດາກົດໝາຍ ໂດຍການຜັດປ່ຽນກັນເປັນປະທານກອງປະຊຸມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ແລະ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມເປັນຄະນະປະທານກອງປະຊຸມມີພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ.

ໃນທີ່ປະຊຸມ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ຮັບຟັງ ແລະ ປະກອບຄຳເຫັນໃສ່ບັນດາເນື້ອໃນຂອງກົດໝາຍ ຈຳນວນ 3 ສະບັບ ທີ່ສະເໜີປັບປຸງຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ຄື: ກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ

ອ່ານຕໍ່ໜ້າ 6

## ປະທານສະພາແຫ່ງຊາດ ເຂົ້າຮ່ວມຂະບວນການຍ່າງເພື່ອສຸຂະພາບ




ໜ້າ 2

## ໄລຍະຜ່ານມາ ກສຕສ ສາມາດຍາດໄດ້ຜົນງານພົ້ນເດັ່ນຫລາຍດ້ານ



ເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 22 ມິຖຸນາ 2022 ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ໄດ້ໃຫ້ສຳພາດກັບສື່ມວນຊົນ ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ກສຕສ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງປະເທດຊາດ, ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ຄົ້ນຄວ້າປະກອບຄຳເຫັນກ່ຽວກັບການ

ອ່ານຕໍ່ໜ້າ 2

## ສະເໜີການສ້າງກົດໝາຍ ການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ



ໃນຕອນເຊົ້າວັນທີ 27 ມິຖຸນາ 2022 ທ່ານ ພົອ. ວິໄລ ຫລ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ຕາງໜ້າກະຊວງປ້ອງກັນຄວາມສະຫງົບຂຶ້ນສະເໜີເຫດຜົນ, ຄວາມຈຳເປັນ ແລະ ເນື້ອໃນຂອງການສ້າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ເຊິ່ງການສ້າງຮ່າງກົດໝາຍສະບັບນີ້ ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ປະກອບດ້ວຍ 4 ເນື້ອໃນຕົ້ນຕໍດັ່ງນີ້:

1. ເຫດຜົນ ແລະ ຄວາມຈຳເປັນໃນການສ້າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.

2. ສະພາບການຄົ້ນຄວ້າສ້າງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.

3. ໂຄງປະກອບ ແລະ ເນື້ອໃນຂອງຮ່າງກົດໝາຍ ວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ.

4. ຄາດຄະເນຜົນໄດ້ຮັບຈາກການສ້າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.

**I. ເຫດຜົນ ແລະ ຄວາມຈຳເປັນ ໃນການສ້າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.**

ສະພາບການຂອງໂລກ ແລະ ພາກພື້ນ ໄດ້ມີການຜັນປ່ຽນຢ່າງວ່ອງໄວ ແລະ ເກີດຂຶ້ນໃໝ່ ຢ່າງສະຫລັບສັບຊ້ອນ ເຊິ່ງຍາກທີ່ຈະຄາດຄະເນ, ໃນນີ້, ບັນຫາຕົ້ນຕໍ ຍັງແມ່ນການແຂ່ງຂັນຍາດແຍ່ງອິດທິພົນ ແລະ ຍາດແຍ່ງຜົນປະໂຫຍດ, ແກ່ດຶງການສ້າງຕັ້ງກຸ່ມພັນທະມິດ, ຕອບໂຕ້ດ້ານການຕ່າງປະເທດ, ການຄ້າ ແລະ ການເຄື່ອນໄຫວທ້າທາຍຂົ່ມຂູ່ດ້ວຍກຳລັງ; ຈາກສະພາບການດັ່ງກ່າວ ມັນໄດ້ກໍ່ໃຫ້ເກີດຂະບວນການຊ່ວງຊີງ, ການຜະລິດ, ສະສົມອາວຸດ ແລະ ວັດຖຸລະເບີດ ທີ່ມີອານຸພາບທຳລາຍໃນລະດັບຕ່າງໆ ບວກກັບສະພາບປະເທດເຮົາ ມີຊາຍແດນຕິດກັບຫລາຍປະເທດ, ໃນນັ້ນ, ມີບາງຈຸດບໍລິເວນຊາຍແດນ ແມ່ນມີຄວາມຫລໍ່ແຫລມ; ເຮັດໃຫ້ເກີດມີການລັກລອບຄ້າຂາຍອາວຸດເຖື່ອນ ແລະ ມີການຄອບຄອງອາວຸດ ແບບບໍ່ຖືກຕ້ອງຕາມກົດໝາຍ ມີລັກສະນະເພີ່ມຂຶ້ນ; ໂດຍສະເພາະພວກກຸ່ມຄົນບໍ່ດີ, ພວກຄ້າຂາຍຢາເສບຕິດ ທີ່ນຳໃຊ້ອາວຸດດັ່ງກ່າວ ປະເຊີນໜ້າໂດຍກົງກັບເຈົ້າໜ້າທີ່ ແລະ ກໍອາດຊະຍາກຳໃນຮູບແບບຕ່າງໆໃນສັງຄົມ, ບັນຫາດັ່ງກ່າວ ໄດ້ສົ່ງຜົນກະທົບໂດຍກົງ ຕໍ່ຄວາມໝັ້ນຄົງທາງດ້ານການເມືອງ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ເວົ້າລວມ; ເວົ້າສະເພາະແມ່ນຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບໃນສັງຄົມຂອງປະເທດເຮົາ ຢ່າງຫລີກລ່ຽງບໍ່ໄດ້.

ສຳລັບ ສປປລາວ ຂອງພວກເຮົາ ຕໍ່ກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ຜ່ານມາ ພັກ, ລັດຖະບານ ກໍຄືຂະແໜງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຂະແໜງການທີ່ກ່ຽວຂ້ອງ ໄດ້ເອົາໃຈໃສ່ໃນການປະສານ, ທັງຮ່ວມມືກັນໃນການຄວບຄຸມ, ຕິດຕາມກວດກາ, ປ້ອງກັນ, ສະກັດກັ້ນ, ຕ້ານ ແລະ ແກ້ໄຂບັນຫາ

ອ່ານຕໍ່ໜ້າ 6


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

**ສືບຕໍ່ຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX**

## ໄລຍະ...

ໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ແລະ ຄຳສະເໜີຂອງປະຊາຊົນ ໃນຂົງເຂດກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳ ແລະ ການຄ້າ, ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຂດເສດຖະກິດພິເສດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫລື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ; ພ້ອມນັ້ນ, ກໍໄດ້ຕັ້ງໜ້າໃນການເຄື່ອນໄຫວວຽກງານຕາມ 3 ພາລະບົດບາດ ນັບຕັ້ງແຕ່ກອງປະຊຸມຄັ້ງປະຖົມມະລຶກ ຈົນມາເຖິງປັດຈຸບັນ ໂດຍການປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການເຄື່ອນໄຫວວຽກງານ 3 ພາລະບົດບາດ ຄື: ດ້ານນິຕິບັດຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ດ້ານການຕິດຕາມກວດກາ ແລະ ວຽກງານອື່ນໆທີ່ປິ່ນອ້ອມ ເຊິ່ງນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ຈົນເຖິງປັດຈຸບັນ, ຜ່ານການເຄື່ອນໄຫວວຽກງານ ກສຕສ ສາມາດສະຫລຸບຕີລາຄາຜົນງານພົ້ນເດັ່ນ ດັ່ງນີ້:

ຜົນສຳເລັດດ້ານນິຕິບັນຍັດ: ເປັນເຈົ້າການ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ເຂົ້າຮ່ວມແຕ່ຫົວທີ ໃນການຄົ້ນຄວ້າ, ກວດກາເນື້ອໃນຮອບດ້ານ ໃຫ້ຄົບຖ້ວນ, ຊັດເຈນ ແລະ ຮັດກຸມ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ມີຄື:

- ການສ້າງ ແລະ ປັບປຸງກົດໝາຍ: ໄດ້ສຳເລັດກົດໝາຍທີ່ກຳມາທິການຮັບຜິດຊອບ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍຍານພາຫະນະທາງບົກ (ສ້າງໃໝ່), ກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ (ສ້າງໃໝ່) ແລະ ກົດໝາຍວ່າດ້ວຍຄົມມະນາຄົມ (ສະບັບປັບປຸງ); ເປັນເຈົ້າການເຂົ້າຮ່ວມຄົ້ນຄວ້າ, ກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍທີ່ກຳມາທິການຮັບຜິດຊອບ ເພື່ອຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ເຊິ່ງສາມາດບັນລຸຕາມແຜນການທີ່ວາງໄວ້ ແລະ ໄດ້ເຂົ້າຮ່ວມກອງປະຊຸມໃນການສ້າງ ແລະ ປັບປຸງກົດໝາຍ ໃນຂົງເຂດແຜນການ ແລະ ການເງິນ ຈຳນວນ 6 ສະບັບ ຄື: ກົດໝາຍວ່າດ້ວຍການຄຸ້ມຄອງສວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ).

- ນິຕິກຳໃຕ້ກົດໝາຍ: ໄດ້ສຳເລັດ ຈຳນວນ 14 ສະບັບ ເປັນຕົ້ນ: ລັດຖະບັດຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ປີ 2012 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ; ຄົ້ນຄວ້າ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການພິຈາລະນາໂຄງການສຳປະທານພັດທະນາໄຟຟ້າ, ບໍ່ແຮ່ ແລະ ໂຄງລ່າງພື້ນຖານ; ອອກລະບຽບການວ່າດ້ວຍການເຄື່ອນໄຫວວຽກງານຂອງພະນັກງານ-ລັດຖະກອນຂອງ ກສຕສ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກສຕສ; ຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ 3 ກົມ ທີ່ຂຶ້ນກັບກຳມາທິການ ຄື: ກົມເສດຖະກິດການຜະລິດ, ກົມເສດຖະກິດການບໍລິການ ແລະ ກົມຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ສຳເລັດສ້າງແຜນດຳເນີນງານການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ກສຕສ ສະພາແຫ່ງຊາດ ຊຸດທີ IX; ຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງ ກສຕສ ສະພາແຫ່ງຊາດ ກັບ 6 ຂະແໜງການທີ່ຕິດພັນກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານ-ລັດຖະກອນສະພາແຫ່ງຊາດ ປະກອບເຂົ້າໃນຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າ, ປະເມີນ ແລະ ປັບປຸງກົດໝາຍ ວ່າການການປົກປັກຮັກສາສິ່ງແວດລ້ອມ; ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານ-ລັດຖະກອນ ປະກອບເຂົ້າໃນຄະນະປະສານງານກະຊວງແຜນດຳເນີນງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງສິ່ງເສດເຫລືອປລາສະຕິກ ແລະ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວາງແຜນຍຸດທະສາດການພັດທະນາແຮ່ທາດ 10 ປີ ຄັ້ງທີ IX (2021-2030) ຂອງຂະແໜງທໍລະນີສາດ ແລະ ບໍ່ແຮ່; ສ່ວນຜົນສຳເລັດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ; ກຳມາທິການ ໄດ້ຍົກສູງພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ດ້ວຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການເຂົ້າຮ່ວມ, ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບັນຫາທີ່ຕິດພັນກັບພາລະບົດບາດຂອງຕົນໃຫ້ມີເນື້ອໃນລະອຽດຄົບຖ້ວນ, ຈະແຈ້ງ ກ່ອນນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ໃນນີ້, ຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມ ໃນກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝວິສາມັນເທື່ອທີ 1, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຄົ້ນຄວ້າຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ລັດຖະບານສະເໜີສະພາແຫ່ງຊາດ ພິຈາລະນາ ມີທັງໝົດ 36 ສະບັບ (ສຳເລັດ 30 ສະບັບ ແລະ ສືບຕໍ່ຄົ້ນຄວ້າ 6 ສະບັບ). ໂດຍລວມແລ້ວ ບັນຫາສ່ວນໃຫຍ່ແມ່ນຕິດພັນກັບການສະເໜີຂໍຍົກເວັ້ນບາງມາດຕາຂອງກົດໝາຍ ແລະ ການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນປະເພດອື່ນຂອງໂຄງການພັດທະນາໄຟຟ້າ, ແຮ່ທາດ ແລະ ອື່ນໆ; ແລະ ຜົນສຳເລັດດ້ານການຕິດຕາມກວດກາກຳມາທິການ ແລະ ກຳມະການສັງກັດກຳມາທິການ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດດ້ານການຕິດຕາມກວດກາຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ແຜນການເຄື່ອນໄຫວຕາມພາລະບົດບາດຂອງຕົນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ, ການອອກບິນເກັບເງິນຄ່າໄຟຟ້າທີ່ບໍ່ຖືກຕ້ອງກັບການຊົມໃຊ້ຕົວຈິງ ແລະ ຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດ ຄຳສັ່ງເລກທີ 15/ນຍ ວ່າດ້ວຍມາດຕະການສະກັດກັ້ນຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19, ການຈັດຕັ້ງປະຕິບັດຄາດໝາຍຕ່າງໆ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຕາມມະຕິກອງປະຊຸມສະພາແຫ່ງຊາດ, ຕິດຕາມການກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ, ຕິດຕາມກວດກາພື້ນທີ່ຕົວຈິງຂອງເນື້ອທີ່ດິນປ່າໄມ້ທຳມະຊາດ ທີ່ສະເໜີໃຫ້ປ່ຽນເປັນທີ່ດິນຍຸດທະສາດປ້ອງກັນຊາດ, ວ່າດ້ວຍຊັບສິນຂອງລັດ ລວມທັງໝົດ 24 ຄັ້ງ ດ້ວຍຮູບແບບວີດີໂອທາງໄກ ແລະ ການລົງເຄື່ອນໄຫວວຽກງານຕົວຈິງ.

ທ່ານຍັງໄດ້ໃຫ້ຮູ້ຕື່ມອີກວ່າ: ນັບແຕ່ກອງປະຊຸມຄັ້ງປະຊຸມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ຈົນເຖິງປັດຈຸບັນ ກສຕສ ໄດ້ຕັ້ງໜ້າໃນການເຄື່ອນໄຫວວຽກງານປະກອບສ່ວນເຮັດໃຫ້ ສປປລາວ ເປັນລັດທີ່ຄຸ້ມຄອງດ້ວຍລັດຖະທຳມະນູນ ແລະ ກົດໝາຍ ມີຄື: ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ເຂົ້າຮ່ວມແຕ່ຫົວທີ ໃນການຄົ້ນຄວ້າ, ກວດກາເນື້ອໃນຮອບດ້ານໃຫ້ຄົບຖ້ວນ, ຊັດເຈນ ແລະ ຮັດກຸມ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ພ້ອມທັງມີການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳ ແລະ ການຄ້າ, ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຂດເສດຖະກິດພິເສດ ແລະ ຕິດຕາມການກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ; ກຳມາທິການ ແລະ ກຳມະການຂອງກຳມາທິການ ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ໃນຂອບເຂດທົ່ວປະເທດ ໄດ້ເອົາໃຈໃສ່ ແລະ ຕັ້ງໜ້າ ເຂົ້າຮ່ວມປະຕິບັດພາລະບົດບາດໃນການຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນງົບປະມານຂອງທ້ອງຖິ່ນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງບັນຫາທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຂອງແຂວງ, ນະຄອນຫລວງ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ເຊັ່ນ: ການຄຸ້ມຄອງວຽກງານຂົນສົ່ງທາງບົກ, ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ການຄຸ້ມຄອງການສຳຫລວດ ແລະ ໂຄງການພັດທະນາຕ່າງໆ ມີທັງໝົດ 91 ຄັ້ງ; ກຳມາທິການ ແລະ ກຳມະການຂອງກຳມາທິການ ຍັງເຫັນປະກົດການລະເມີດລະບຽບກົດໝາຍ, ມະຕິຂອງສະພາແຫ່ງຊາດທີ່ກຳນົດໄວ້ຂອງບາງອົງການອຳນາດລັດທັງຂັ້ນສູນກາງ ແລະ ທ້ອງຖິ່ນ ບົນພື້ນຖານຂໍ້ມູນດັ່ງກ່າວ, ກຳມາທິການໄດ້ຄົ້ນຄວ້າບາງມາດຕະການແກ້ໄຂນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາອອກມະຕິໃຫ້ລັດຖະບານ, ຂະແໜງການ ແລະ ທ້ອງຖິ່ນ ນຳໄປພິຈາລະນາ ແລະ ປັບປຸງແກ້ໄຂໄດ້ທັນເວລາ; ກຳມາທິການ ແລະ ກຳມະການຂອງກຳມາທິການ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການປັບປຸງແກ້ໄຂບັນດາບັນຫາຕ່າງໆທີ່ຄົງຄ້າງໃນການບໍລິຫານລັດ ການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ຍືນຍົງ ແລະ ເກີດປະໂຫຍດສູງສຸດ. ທັງໄດ້ເປັນບ່ອນອີງໃນການປັບປຸງເນື້ອໃນຂອງກົດໝາຍ ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ຖືກຕ້ອງ ກັບສະພາບຄວາມເປັນຈິງຂອງປະເທດຊາດ ພ້ອມທັງເປັນການປະກອບສ່ວນຍົກສູງພາລະບົດບາດຂອງສະພາແຫ່ງຊາດ ໃນການສ້າງລັດແຫ່ງກົດໝາຍ ໃຫ້ນັບມື້ນັບສູງຂຶ້ນ.

ພ້ອມນັ້ນ, ກຳມາທິການ ຍັງໄດ້ເປັນເຈົ້າການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ຜູ້ປະກອບການ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ໃຫ້ທິດຊີ້ນຳ ແລະ ອອກໜັງສືທາງລັດຖະການ ໄປຍັງພາກສ່ວນທີ່ກ່ຽວຂ້ອງ ໃຫ້ສອດຄ່ອງ, ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ເຊິ່ງມີທັງໝົດ 69 ສະບັບ, ໃນນັ້ນ ຄົ້ນຄວ້າສຳເລັດ 62 ສະບັບ ເທົ່າກັບ 89,9% ແລະ ສືບຕໍ່ຄົ້ນຄວ້າ 07 ສະບັບ ເທົ່າກັບ 10,1% ແລະ ກຳມະການຂອງກຳມາທິການປະຈຳຢູ່ແຕ່ລະເຂດເລືອກຕັ້ງໃນຂອບເຂດທົ່ວປະເທດ ໄດ້ເຂົ້າຮ່ວມຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນ ທັງໝົດ 234 ເລື່ອງ ໃນນີ້, ໄດ້ຄົ້ນຄວ້າສຳເລັດ 174 ເລື່ອງ ເທົ່າກັບ 74,36%, ຍັງສືບຕໍ່ຄົ້ນຄວ້າ 60 ເລື່ອງ ເທົ່າກັບ 25.64%. ບັນຫາພົ້ນເດັ່ນທີ່ປະຊາຊົນໄດ້ຮ້ອງຂໍ ບັນຫາທີ່ພົ້ນເດັ່ນແມ່ນການຮ້ອງຂໍຄວາມເປັນທຳກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍການຊົດເຊີຍເນື້ອທີ່ດິນປຸກສ້າງ, ດິນສວນ, ດິນນາ ຈາກບັນຫາຜົນກະທົບຈາກໂຄງການພັດທະນາຕ່າງໆ.

ຜ່ານການຈັດຕັ້ງປະຕິບັດວຽກງານຕາມສາມພາລະບົດບາດ ແລະ ວຽກງານປິ່ນອ້ອມ ເຫັນວ່າ ກສຕສ ຍັງສາມາດຕີລາຄາລວມດ້ານຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ທິດທາງແກ້ໄຂ ເຊິ່ງເຫັນໄດ້ຂໍ້ສະດວກຄືໄດ້ຮັບການເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ສິດຈາກຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ, ມີລະບົບການຈັດຕັ້ງ, ມີແບບແຜນວິທີການເຮັດວຽກ, ມີການແບ່ງງານແບ່ງຄວາມຮັບຜິດຊອບ ຢ່າງຈະແຈ້ງ, ພະນັກງານສ່ວນຫລາຍມີຄວາມຮູ້ຄວາມສາມາດ, ມີບົດຮຽນ ແລະ ປະສົບການໃນວຽກງານດີພໍສົມຄວນ ບວກໃສ່ຄວາມເປັນເຈົ້າການສູ້ຊົນ, ມີຄວາມກະຕືລືລົ້ນ, ບຸກບືນ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ຮັບຜິດຊອບ; ມີການຮ່ວມມືປະສານສົມທົບຢ່າງແໜ້ນແຟ້ນ ກັບບັນດາກຳມາທິການຕ່າງໆຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ນະຄອນຫລວງ, ຂະແໜງການທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; ໄດ້ຕັ້ງໜ້າເຄື່ອນໄຫວວຽກງານ ແລະ ເປັນເຈົ້າການໃນການປະສານສົມທົບກັບບັນດາກຳມາທິການທີ່ກ່ຽວຂ້ອງ, ສະພາປະຊາຊົນຂັ້ນແຂວງ ແລະ ນະຄອນຫລວງ, ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ຕາມພາລະບົດບາດຂອງຕົນ ສາມາດປະຕິບັດໄດ້ ແລະ ຮັບຜົນສຳເລັດເປັນສ່ວນໃຫຍ່; ການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນພາຍໃນກຳມາທິການ ໃນຖານະເປັນເສນາທິການຮອບດ້ານ ແມ່ນສາມາດເຮັດສຳເລັດໜ້າທີ່ ຕາມພາລະບົດບາດ ແລະ ຕາມການມອບໝາຍ ທ່ານຍັງໃຫ້ຮູ້ຕື່ມກ່ຽວກັບຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ຈຳນວນໜຶ່ງ ເຊິ່ງຈະຕ້ອງໄດ້ສືບຕໍ່ເອົາໃຈໃສ່ແກ້ໄຂຄື: ການເຄື່ອນໄຫວລົງພົບປະຜູ້ມີສິດເລືອກຕັ້ງ ແລະ ການລົງເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝວິສາມັນເທື່ອທີ 1, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຍັງຊັກຊ້າ; ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງຊາດ ແລະ ການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນໜຶ່ງ ຍັງຊັກຊ້າ ແລະ ແກ່ຍາວເວລາ ຍ້ອນເອກະສານບໍ່ຄົບຖ້ວນ ແລະ ຕິດພັນກັບຫລາຍພາກສ່ວນ; ຂອດປະສານງານ ລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຍັງບໍ່ທັນຊັດເຈນ ແລະ ກົມກຽວກັນ;

ໃນຕອນທ້າຍ, ທ່ານຍັງໃຫ້ຮູ້ວ່າໃນຕໍ່ໜ້າກຳມາທິການຈະສຸມໃສ່ຈັດຕັ້ງປະຕິບັດເປົ້າໝາຍ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງ ກສຕສ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃຫ້ມີປະສິດທິພາບ, ປະສິດທິຜົນສູງ ແລະ ກຳນົດທິດທາງແຜນການຈຸດສຸມໃນແຕ່ລະດ້ານຄື: ການປະຕິບັດພາລະບົດບາດດ້ານນິຕິບັນຍັດຍົກສູງຄວາມເປັນເຈົ້າການ ໃນການປະສານສົມທົບກັບກຳມາທິການອື່ນຂອງສະພາແຫ່ງຊາດ ແລະ ພາກສ່ວນຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມແຕ່ຫົວທີໃນການຄົ້ນຄວ້າ, ການກວດກາ ແລະ ປັບປຸງຮ່າງກົດໝາຍໃຫ້ມີເນື້ອໃນຄົບຖ້ວນ, ຈະແຈ້ງ, ຮັດກຸມ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ກ່ອນຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຮັບປະກັນໃຫ້ກົດໝາຍທີ່ໄດ້ຮັບຮອງ ແລະ ປະກາດໃຊ້ແລ້ວນັ້ນ ຮັບໃຊ້ຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ ແລະ ຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການໃນການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດເຮົາ ໃນແຕ່ລະໄລຍະ; ສຸມໃສ່ຊຸກຍູ້ການສ້າງ ແລະ ປັບປຸງກົດໝາຍຂົງເຂດເສດຖະກິດ ໃຫ້ສຳເລັດຈຳນວນ 11 ສະບັບ ແລະ ສຳລັບການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຍົກສູງພາລະບົດບາດຂອງກຳມາທິການ ໃນການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຮັບປະກັນໃຫ້ແກ່ການຕົກລົງບັນຫາຕ່າງໆ ໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມກົດໝາຍ, ນຳເອົາຜົນປະໂຫຍດສູງສຸດມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ; ປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ຄົ້ນຄວ້າບັນຫາສຳຄັນພື້ນຖານຂອງຊາດ ທີ່ຕິດພັນກັບຂົງເຂດຄວາມຮັບຜິດຊອບຂອງກຳມາທິການ ຕາມການສະເໜີຂອງລັດຖະບານ ສູ້ຊົນໃຫ້ໄດ້ຢ່າງໜ້ອຍ 80%.

## ປະທານ...

ເນື່ອງໃນໂອກາດວັນສາກົນຕ້ານຢາເສບຕິດ ປະຈຳປີ 2022 ຄົບຮອບ 35 ປີ (26 ມິຖຸນາ 1987-26 ມິຖຸນາ 2022) ໄດ້ມີພິທີໂຮມຊຸມນຸມ ຈັດກິດຈະກຳຍ່າງມີນິມາລາທອນເພື່ອສຸຂະພາບໃນວັນທີ 25 ມິຖຸນາ 2022 ທີ່ປະຕູໄຊ ນະຄອນຫລວງວຽງຈັນ ຕາງໜ້າສະພາແຫ່ງຊາດໂດຍການເຂົ້າຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີທ່ານ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ທ່ານ ພົນເອກ ວິໄລ ຫລ້າຄຳຟອງ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ມີຜູ້ຕາງໜ້າຈາກບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງເຂົ້າຮ່ວມ.

# 6 ເດືອນຕົ້ນປີ 2022 GDP ຂະຫຍາຍຕົວ 4,3%

ອ່ານຕໍ່ສະບັບກ່ອນ...

3) ປັບປຸງກົນໄກການສະໜອງເງິນຕາຕ່າງປະເທດຂອງລະບົບທະນາຄານ ໃຫ້ແກ່ການນຳເຂົ້າສິນຄ້າບູລິມະສິດ ເປັນຕົ້ນ ນ້ຳມັນເຊື້ອໄຟໃຫ້ມີປະສິດທິຜົນກວ່າເກົ່າ; ໄປຄຽງຄູ່ກັບການສ້າງເງື່ອນໄຂສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ ເຂົ້າໃນການຄ້າ, ການລົງທຶນກັບປະເທດໃກ້ຄຽງ ໃຫ້ເປັນຮູບປະທຳຫລາຍຂຶ້ນ;

4) ສືບຕໍ່ປະຕິບັດນະໂຍບາຍສິນເຊື່ອຊຸກຍູ້ການຜະລິດສິນຄ້າປາຍແຫລມ, ການຜະລິດທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ;

5) ສືບຕໍ່ສ້າງເງື່ອນໄຂອຳນວຍຮອບດ້ານ ເພື່ອຊຸກຍູ້ການຜະລິດສິນຄ້າປາຍແຫລມ, ການຜະລິດທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ; ໄປຄຽງຄູ່ກັບເອົາໃຈໃສ່ແກ້ໄຂຂອດອຸດຕັນຕ່າງໆ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຶງດູດການລົງທຶນເອກະຊົນພາຍໃນແລະການລົງທຶນໂດຍກົງຈາກຕ່າງປະເທດຕາມທິດຍືນຍົງ ໃຫ້ຫລາຍຂຶ້ນ, ສຸມໃສ່ບັນດາໂຄງການລົງທຶນຂະໜາດໃຫຍ່ໆຕາມແຜນກຳນົດແລ້ວ ໃຫ້ສາມາດດຳເນີນການໂດຍໄວ ເພື່ອດຶງເງິນຕາຕ່າງປະເທດເຂົ້າລະບົບ

6) ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ ໃຫ້ຢູ່ໃນລະດັບທີ່ເໝາະສົມ ໂດຍການຫລຸດອັດຕາພາສີນຳເຂົ້າ, ອາກອນຊົມໃຊ້ນ້ຳມັນເຊື້ອໄຟ ຕາມແຕ່ລະໄລຍະ, ການທົບທວນ ແລະ ກຳນົດໂຄງສ້າງລາຄາສິນຄ້າ ແລະ ຄ່າບໍລິການໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງຂອງປະເທດ, ສະກັດກັ້ນບໍ່ໃຫ້ມີປາກົດການສວຍໂອກາດຂຶ້ນລາຄາ ແລະ ກັກຕຸນສິນຄ້າ ເພື່ອຫລຸດຜ່ອນຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

(2). ເລັ່ງໃສ່ຊຸກຍູ້ສົ່ງເສີມການຜະລິດກະສິກຳ-ປ່າໄມ້, ການປຸງແຕ່ງ ແລະ ການບໍລິການໃຫ້ສາມາດບັນລຸຕາມຄາດໝາຍທີ່ໄດ້ກຳນົດໄວ້ດ້ວຍບາງມາດຕະການ:

1) ຊຸກຍູ້ການຜະລິດກະສິກຳ, ປັບປຸງກຸ່ມການຜະລິດຕິດພັນກັບການປັບປຸງໂຄງສ້າງການປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້, ພ້ອມທັງເອົາໃຈໃສ່ການກະກຽມປັດໄຈການຜະລິດ ໃຫ້ພຽງພໍ ແລະ ທັນກັບລະດູການຜະລິດ ເພື່ອຄ້ຳປະກັນສະບຽງອາຫານຮັບໃຊ້ພາຍໃນ ແລະ ເພື່ອສົ່ງອອກ.

2) ສືບຕໍ່ສົ່ງເສີມ ແລະ ສ້າງເງື່ອນໄຂການຜະລິດເປັນກຸ່ມຕາມຂະແໜງການ, ຕາມສາຂາວິຊາຊີບ ທີ່ມີທ່າແຮງຕິດພັນກັບການນຳໃຊ້ແລວທາງລົດໄຟລາວ-ຈີນ, ແກ້ໄຂບັນຫາລະບົບການຂົນສົ່ງສິນຄ້າໄປຕ່າງປະເທດຢູ່ດ່ານຕ່າງໆ ໃຫ້ແຂງແຮງ ແລະ ດີຂຶ້ນກວ່າເກົ່າ.

3) ເອົາໃຈໃສ່ໃນການພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດໃຫ້ດີກວ່າເກົ່າ ໂດຍເລັ່ງກວດກາ ແລະ ປັບປຸງນະໂຍບາຍ ແລະ ສັນຍາທີ່ໄດ້ເຊັນກັນຜ່ານມາໃຫ້ສອດຄ່ອງກວ່າເກົ່າ, ພ້ອມດຽວກັນນັ້ນສຸມໃສ່ຊຸກຍູ້ໂຄງການລົງທຶນຂະໜາດໃຫຍ່ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ເລັ່ງໃສ່ການພັດທະນາໂດຍໄວ ເຊັ່ນ: ເຂດພັດທະນາເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຢູ່ຈຸດນາເຕີຍ ແຂວງຫລວງນ້ຳທາ, ຈຸດນາໝໍ້ ແຂວງອຸດົມໄຊ, ໂຄງການເຂດພັດທະນາໃໝ່ສີທັນດອນເມືອງໂຂງ, ເຂດບໍ່ເຕ່ນແດນງາມ, ສາມຫລ່ຽມຄຳ, ກວມລວມໄຊເຊດຖາ ແລະ ບ່ອນອື່ນໆ.

4) ສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມ 7 ນະໂຍບາຍຂອງແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະສຸມໃສ່ພັດທະນາບັນດາວິສາຫະກິດທີ່ຜະລິດສິນຄ້າເພື່ອສົ່ງອອກ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບຕ່າງປະເທດເທື່ອລະກ້າວ;

5) ສືບຕໍ່ປັບປຸງເນື້ອໃນໂຄສະນາ ເພື່ອດຶງດູດນັກທ່ອງທ່ຽວຈາກຕ່າງປະເທດ ຜ່ານຊ່ອງທາງຕ່າງໆ ໄປຄຽງຄູ່ກັບການສົ່ງເສີມການທ່ອງທ່ຽວພາຍໃນ, ສຸມໃສ່ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານ-ວັດຖຸເຕັກນິກ ແລະ ການບໍລິການ ເພື່ອໃຫ້ສາມາດດຶງດູດການທ່ອງທ່ຽວຫລາຍຂຶ້ນ.

(3) ສືບຕໍ່ເລັ່ງໃສ່ປະຕິຮູບກົນໄກ ແລະ ເຄື່ອງມືໃນການຄຸ້ມຄອງການເກັບລາຍຮັບ-ລາຍຈ່າຍງົບປະມານ ໃຫ້ມີປະສິດທິຜົນກວ່າເກົ່າ:

1) ເລັ່ງໃສ່ຂະຫຍາຍເຄື່ອງມືທັນສະໄໝເຂົ້າໃນການຄຸ້ມຄອງ ແລະ ຈັດເກັບລາຍຮັບໃນຂະແໜງການເງິນ ໃຫ້ກວມເອົາ 80% ໃນຂອບເຂດທົ່ວປະເທດ, ຊຸກຍູ້ທຸກຫົວໜ່ວຍທຸລະກິດຖືບັນຊີ ແລະ ເຂົ້າລະບົບ TaxRIS, ເລັ່ງປັບປຸງກົນໄກການເກັບລາຍຮັບທີ່ໝັ້ນຄົງ ຈາກອາກອນທີ່ດິນ, ອາກອນຊັບສິນ ແລະ ອື່ນໆ ໃຫ້ມີປະສິດທິຜົນກວ່າເກົ່າ; ສືບຕໍ່ຂຸດຄົ້ນແຫລ່ງລາຍຮັບຈາກທຸກແຫລ່ງລວມທັງເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມລັດຖະບັດຍັດ 002/ປປທ ໃຫ້ຄົບຖ້ວນ.

2) ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານແຫ່ງລັດ, ຄຸ້ມຄອງລາຍຈ່າຍຕ່າງໆໃຫ້ມີຄວາມຮັດກຸມຕາມທິດປະຢັດ ແລະ ຕ້ານການຟຸມເຟືອຍ.

3) ສືບຕໍ່ຄົ້ນຄວ້າແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ຕາມ 6

ອ່ານຕໍ່ສະບັບໜ້າ...

# ຮອງນາຍົກລັດຖະມົນຕີ ລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ

ອ່ານຕໍ່ສະບັບກ່ອນ...

- ໄດ້ສຸມໃສ່ປັບປຸງກົງຈັກຄຸ້ມຄອງການເກັບລາຍຮັບແຕ່ສູນກາງລົງຮອດທ້ອງຖິ່ນໃນຂະແໜງພາສີ, ສ່ວຍສາອາກອນ, ຄັງເງິນ ແລະ ຂະແໜງອື່ນໆ ເພື່ອແກ້ໄຂຂອດຂັ້ນທີ່ບໍ່ຈຳເປັນທີ່ເຮັດໃຫ້ການເກັບລາຍຮັບຕົກເຮ່ຍເສຍຫາຍ; ໄດ້ຫັນເອົາພະນັກງານ-ເຈົ້າໜ້າທີ່ຂອງພາສີ, ສ່ວຍສາອາກອນ ແລະ ຄັງເງິນໄປສູ່ວິຊາຊີບ ດ້ວຍກົນໄກເຝິກອົບຮົມຕາມຫລັກສູດສະເພາະ, ໄດ້ດຳເນີນການແກ້ໄຂປະກົດການຫຍໍ້ທໍ້ດ້ວຍການກວດກາປົກກະຕິ ແລະ ສະເພາະກິດ.

3)ໄດ້ສຸມໃສ່ປັບປຸງສະພາບແວດລ້ອມ ແລະ ການແກ້ໄຂຄວາມຫຍຸ້ງຍາກ ຂອງການດຳເນີນທຸລະກິດຕາມບັນດາວຽກງານ ແລະ ຕົວຊີ້ວັດຂອງຄຳສັ່ງເລກທີ 02/ນຍ ແລະ ຄຳສັ່ງເລກທີ 03/ນຍ ເຊິ່ງສາມາດຫລຸດຂັ້ນຕອນ ແລະ ໄລຍະເວລາການເລີ່ມຕົ້ນທຸລະກິດລົງຕື່ມອີກຫລາຍສົມຄວນ, ສາມາດອອກໃບທະບຽນວິສາຫະກິດ ແລະ ເລກບັດປະຈຳຕົວຜູ້ເສຍອາກອນໃນເວລາດຽວກັນ. ນອກຈາກນັ້ນ, ໄດ້ສຳເລັດສ້າງຕັ້ງໜ່ວຍງານປະສານງານການລົງທຶນປະຕູດຽວຢູ່ບັນດາກະຊວງ-ຂະແໜງການກ່ຽວຂ້ອງ.

- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ການກຸ້ມຕົນເອງທາງດ້ານງົບປະມານ ມີຈຳນວນ 5 ພາກສ່ວນ (I. ມະຫາວິທະຍາໄລແຫ່ງຊາດ, 2. ວິທະຍາໄລ ເຕັກນິກປາກປ່າສັກ, 3. ໂຮງໝໍເສດຖາທິລາດ, 4. ໂຮງໝໍມະໂຫສົດ ແລະ 5. ໂຮງໝໍມິດຕະພາບ 150 ຕຽງ-ມິດຕະພາບ) ແລະ ສືບຕໍ່ເກັບກຳຂໍ້ມູນຫົວໜ່ວຍວິຊາການ ຈຳນວນໜຶ່ງເພື່ອສຶກສາຄວາມເປັນໄປໄດ້ໃນການຫັນໄປສູ່ກຸ້ມຕົນເອງທາງດ້ານງົບປະມານໃຫ້ໄດ້ຕື່ມອີກ.

ສັງລວມແລ້ວ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຕາມ 5 ວຽກຈຸດສຸມທີ່ໄດ້ກ່າວມາຂ້າງເທິງໃນຜ່ານມາແມ່ນໄດ້ດຳເນີນດ້ວຍຄວາມພະຍາຍາມຢ່າງຕັ້ງໜ້າ ເຊິ່ງໄດ້ຊ່ວຍໃຫ້ເສດຖະກິດ-ການເງິນຂອງປະເທດເຮົາຄ່ອຍໆຟື້ນຕົວຄືນ ແລະ ບໍ່ໃຫ້ຕົກເຂົ້າວິກິດການ.

**6. ຂໍ້ຄົງຄ້າງ ແລະ ສາເຫດ.**

**6.1. ຂໍ້ຄົງຄ້າງ.**

1) ການເຜີຍແຜ່ເຊື່ອມຊຶມກົດໝາຍ ແລະ ນິຕິກຳຕ່າງໆ ກໍຄືແຜນແຕ່ລະດ້ານ ຂອງບາງພາກສ່ວນ, ບາງຂັ້ນຍັງບໍ່ທັນທົ່ວເຖິງ, ການຈັດຕັ້ງປະຕິຕົວຈິງມີຄວາມຊັກຊ້າ.

2) ເຖິງຈະສ້າງ ແລະ ປະກາດໃຊ້ນິຕິກຳຫລາຍສະບັບ, ແຕ່ການຄຸ້ມຄອງການຈັດຕັ້ງປະຕິບັດຍັງບໍ່ທັນໄດ້ດີ, ການຊຳລະສະສາງຂອງບາງພາກສ່ວນຍັງບໍ່ຜ່ານລະບົບທະນາຄານ; ການນຳໃຊ້ລະບົບບັນຊີຍັງບໍ່ທັນກວ້າງຂວາງ; ການເກັບລາຍຮັບບໍ່ຄົບຖ້ວນ ແລະ ຍັງມີການຮົ່ວໄຫລຢູ່ບາງພາກສ່ວນ, ການແກ້ໄຂໜີ້ສິນຍັງຄືບໜ້າຊ້າ ແລະ ສະພາບເສດຖະກິດມະຫາພາກມີຄວາມບອບບາງ.

3) ບັນດາຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ທັນເປັນເຈົ້າການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງວາລະແຫ່ງຊາດ ເທົ່າທີ່ຄວນ, ການຊຸກຍູ້ພາກສ່ວນເສດຖະກິດຕ່າງໆ ເຂົ້າມາມີສ່ວນຮ່ວມໃນການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການຍັງບໍ່ທັນໄດ້ຫລາຍ, ຂໍ້ມູນໂຄງການເພື່ອມາຊຸກຍູ້ການລະດົມທຶນຈາກພາກເອກະຊົນ ບາງດ້ານຍັງບໍ່ທັນລະອຽດ.

**6.2. ສາເຫດທີ່ພາໃຫ້ມີຈຸດອ່ອນ, ຂໍ້ຄົງຄ້າງ:**

1) ຄວາມຮັບຮູ້ ແລະ ເຂົ້າໃຈຂອງພະນັກງານຢູ່ຂະແໜງການ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ຕໍ່ກັບວາລະແຫ່ງຊາດ ຍັງບໍ່ທັນເລິກເຊິ່ງ, ເຮັດໃຫ້ການປະຕິບັດຕົວຈິງ ຍັງມີຄວາມຊັກຊ້າ;

ອ່ານຕໍ່ໜ້າ 8...

# ລາຍງານຄວາມຄືບໜ້າການແກ້ໄຂບັນຫາຢາເສບຕິດ

ອ່ານຕໍ່ສະບັບກ່ອນ...

- ໄດ້ຂຶ້ນບັນຊີເປົ້າໝາຍຂົນສົ່ງ-ຄ້າຂາຍຢາເສບຕິດລາຍຍ່ອຍ, ລາຍກາງ ແລະ ລາຍໃຫຍ່ໃນທົ່ວປະເທດ ໄດ້ຫລາຍເປົ້າໝາຍ.

- ນຳກຳລັງຈາກສູນກາງ ລົງປະຈຳການເພີ່ມຢູ່ຈຸດຫລໍ່ແຫລມ, ຈຸດຂົນສົ່ງຂ້າມລອຍຢູ່ແຂວງອຸດົມໄຊ, ຫລວງນ້ຳທາ ແລະ ບໍ່ແກ້ວ; ລວມ 24 ສະຫາຍ ແລະ ນຳໃຊ້ໝາວິຊາສະເພາະ 6 ໂຕ.

- ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງສຳຫລວດ ແລະ ທຳລາຍສວນຝິ່ນ 569 ຮຕ, ທຳລາຍສວນກັນຊາ 4,2 ຮຕ ແລະ ສ້າງບົດບັນທຶກຢຸດເຊົາການປູກຝິ່ນກັບ 12.859 ຄອບຄົວ.

- ໄດ້ອອກໃບຢັ້ງຢືນໃຫ້ບໍລິສັດທີ່ເຂົ້າຮ່ວມປະຕິບັດໂຄງການປູກພືດທົດແທນການປູກຝິ່ນຢູ່ ສປປລາວ ຈຳນວນ 50 ບໍລິສັດ ທີ່ໄດ້ຈັດສັນອາຊີບໃຫ້ປະຊາຊົນຢູ່ທ້ອງຖິ່ນໄດ້ຫລາຍກວ່າ 44.000 ຄອບຄົວ; ທີ່ໄດ້ຮັບການສະໜັບສະໜູນປະຕິບັດໂຄງການພັດທະນາທາງເລືອກທົດແທນການປູກພືດທີ່ມີສານເສບຕິດຈາກສາກົນ.

- ໄດ້ເຂົ້າຮ່ວມກອງປະຊຸມຢັ້ງຢືນຮັບຮອງເອົາມະຫາວິທະຍາໄລປອດຢາເສບຕິດ ຈຳນວນ 10 ແຫ່ງ; ຂຶ້ນແຜນຜະລິດຢາ T.0 ເມັດ ເພື່ອປິ່ນປົວຜູ້ຕິດຢາເສບຕິດປະເພດຝິ່ນ ແລະ ເຮໂຣອິນ.

- ໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງເພື່ອທຳລາຍສານເຄມີທີ່ຍຶດໄດ້ຢູ່ແຂວງບໍ່ແກ້ວ, ຫລວງນ້ຳທາ ແລະ ຫລວງພະບາງ ລວມທັງໝົດ 169 ໂຕນ.

**5.ວຽກງານປັບປຸງຂີດຄວາມສາມາດການເຄື່ອນໄຫວເຮັດໜ້າທີ່ຂອງລະບົບການເມືອງແຕ່ລະຂັ້ນ ເພື່ອຊີ້ນຳ-ນຳພາການແກ້ໄຂບັນຫາຢາເສບຕິດທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.**

- ຄະນະພັກ-ອົງການປົກຄອງນະຄອນຫລວງວຽງຈັນ-ອົງການປົກຄອງແຂວງ ໃນທົ່ວປະເທດໄດ້ຊີ້ນຳ ແລະ ປັບປຸງລະບົບການເມືອງຂັ້ນຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດທັງສືບຕໍ່ຫັນກຳລັງລົງກໍ່ສ້າງຮາກຖານສ້າງບ້ານປອດຄະດີ, ບ້ານປ້ອງກັນຄວາມສະຫງົບດີ, ບ້ານປອດຢາເສບຕິດ ແລະ ອື່ນໆ.

- ກະຊວງປ້ອງກັນຄວາມສະຫງົບ ໄດ້ເອົາກຳລັງລົງກໍ່ສ້າງຮາກຖານຢູ່ນະຄອນຫລວງວຽງຈັນ ແລະ 6 ແຂວງ ຄື: ແຂວງບໍ່ແກ້ວ, ຫລວງນ້ຳທາ, ຫົວພັນ, ໄຊສົມບູນ, ບໍລິຄຳໄຊ ແລະ ຄຳມ່ວນ.

**6. ວຽກງານເພີ່ມທະວີການຮ່ວມມືສາກົນ.**

- ກະຊວງປ້ອງກັນຄວາມສະຫງົບ ສສ.ຫວຽດນາມ ໄດ້ຊ່ວຍສ້າງຫ້ອງການປະສານງານເພື່ອແກ້ໄຂອາຊະຍາກຳປະເພດຕ່າງໆ ໂດຍສະເພາະບັນຫາຢາເສບຕິດຢູ່ເຂດຊາຍແດນ, ອີງຕາມແຜນການຮ່ວມມື ເພື່ອນຈະຊ່ວຍເຫລືອ ຈຳນວນ 287 ຫລັງ, ຜ່ານການໄປສຳຫຼວດຕົວຈິງ ເຫັນວ່າມີບາງແຂວງ ບໍ່ມີພື້ນທີ່ເໝາະສົມ ຈຶ່ງ

ອ່ານຕໍ່ໜ້າ 7...

# ຕາງໜ້າຄະນະປະຈຳ ສພຊ ປະກອບຄຳເຫັນໃສ່ ບົດລາຍງານການແກ້ໄຂບັນຫາຢາເສບຕິດ

ອ່ານຕໍ່ສະບັບກ່ອນ...

**II. ກ່ຽວກັບທິດທາງແຜນການວຽກງານໃນຕໍ່ໜ້າ:**

ຄະນະປະຈຳສະພາແຫ່ງຊາດ ມີຄວາມເປັນເອກະພາບ ຕໍ່ທິດທາງແຜນການວຽກງານຈຸດສຸມ ໃນຕໍ່ໜ້າທີ່ລັດຖະບານໄດ້ສະເໜີຢູ່ໃນບົດລາຍງານ, ແຕ່ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດໃຫ້ບັນລຸຄາດໝາຍທີ່ໄດ້ກຳນົດໄວ້, ຄະນະປະຈຳສະພາແຫ່ງຊາດ ມີບາງທັດສະນະ ເພື່ອສະເໜີໃຫ້ລັດຖະບານ ກໍຄືກະຊວງປ້ອງກັນຄວາມສະຫງົບ ນຳໄປຄົ້ນຄ້ວາພິຈາລະນາເພີ່ມເຕີມ ດັ່ງນີ້:

1. ໃຫ້ເພີ່ມທະວີການຍົກສູງຄວາມສາມາດ ໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃຫ້ກາຍເປັນຄວາມຮັບຜິດຊອບໂດຍກົງ, ເດັດຂາດ ຂອງຄະນະພັກ-ຄະນະນຳແຕ່ລະຂັ້ນ, ຖືເອົາການແກ້ໄຂບັນຫາຢາເສບຕິດ ເປັນມາດຕະຖານເງື່ອນໄຂໜຶ່ງ ໃນຂະບວນການຮັກຊາດ ແລະ ພັດທະນາ, ສ້າງບ້ານປອດຢາເສບຕິດ, ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ບ້ານ, ສຳນັກງານ, ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ບັນດາຫົວໜ່ວຍການຜະລິດ-ທຸລະກິດ...ເພື່ອເປັນການປຸກລະດົມ, ຊຸກຍູ້ທຸກຄົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດຢ່າງແຂງແຮງ, ເປັນຂະບວນການ, ມີປະສິດທິຜົນ ແລະ ໄດ້ຮັບຜົນດີ;

2. ໃຫ້ສືບຕໍ່ສ້າງຄວາມຮັບຮູ້ໃຫ້ສັງຄົມ ດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍ ແລະ ຄວາມອັນຕະລາຍ ຂອງຢາເສບຕິດ ດ້ວຍຫລາຍຮູບແບບ, ຫລາຍວິທີ, ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ສະຖາບັນຄອບຄົວ ແລະ ຊຸມຊົນໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ແຂງແຮງ, ສິ່ງສຳຄັນຕ້ອງເຮັດໃຫ້ປະຊາຊົນ, ສະຖາບັນຄອບຄົວ, ບ້ານມີສ່ວນຮ່ວມ ແລະ ເປັນເຈົ້າການ ໃນການສະໜອງຂໍ້ມູນ, ຂ່າວສານ ກ່ຽວກັບບັນຫາຢາເສບຕິດຢູ່ຂັ້ນຮາກຖານດ້ວຍຄວາມຕື່ນຕົວ ແລະ ເປັນເຈົ້າການ;

3. ໃຫ້ສືບຕໍ່ປັບປຸງ, ສ້າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ ໃຫ້ຮັດກຸມ, ບໍ່ໃຫ້ມີຊ່ອງວ່າງ, ຖືກຕ້ອງ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແລະ ການເລັ່ງທວງໃຫ້ແກ່ການແກ້ໄຂບັນຫາຢາເສບຕິດ, ຄຽງຄູ່ກັນນັ້ນ ຕ້ອງປັບປຸງກົນໄກ, ລະບຽບການ ທີ່ກົດໜ່ວງຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໂດຍສະເພາະແມ່ນການກຳນົດມາດຕະຖານໂທດປະຫານຊີວິດ, ການແກ້ໄຂຂອງກາງ ຫລື ວັດຖຸ, ຊັບສິນ ທີ່ໄດ້ມາຈາກການກະທຳຜິດຢາເສບຕິດ ບໍ່ປະໃຫ້ເປັນຊ່ອງວ່າງເພື່ອສວຍໃຊ້ໃນການຕໍ່ລອງ,ແກ້ໄຂຄວາມຊັກຊ້າ ໃນການກວດສອບ, ກວດກາ, ວິໄຈປະລິມານສານເສບຕິດ ເພື່ອຮັບປະກັນໃຫ້ແກ່ການແກ້ໄຂຄະດີຢາເສບຕິດ ມີຄວາມວ່ອງໄວ, ທັນການ ແລະ ມີປະສິດທິຜົນສູງກວ່າເກົ່າ;

4. ໃຫ້ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ກໍຄືໜ່ວຍງານ ແລະ ບຸກຄະລາກອນ ທີ່ຮັບຜິດຊອບໂດຍກົງຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ມີຄວາມສາມາດພຽງພໍ ໃນການເຄື່ອນໄຫວວຽກງານຂອງຕົນ. ໃນນັ້ນ, ປັບປຸງຂະແໜງການປ້ອງກັນຄວາມສະຫງົບ ທີ່ເປັນເສນາທິການໃຫ້ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ,ຂັ້ນເມືອງ, ຂັ້ນບ້ານ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ ໃນການປະຕິບັດໜ້າທີ່. ພ້ອມນີ້, ກໍຕ້ອງເອົາໃຈໃສ່ເພີ່ມຄວາມສາມາດດ້ານພື້ນຖານໂຄງລ່າງ, ເຕັກນິກ-ວິຊາການ, ເຄື່ອງມືທີ່ທັນສະໄໝ, ງົບປະມານຮັບໃຊ້ຢ່າງເໝາະສົມ ແລະ ເປັນລະບົບຄົບຊຸດ ເພື່ອຮັບໃຊ້ວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ມີປະສິດຕິພາບ ແລະ ປະສິດທິຜົນ;

5. ໃຫ້ເອົາໃຈໃສ່ຕໍ່ການບຳ

ອ່ານຕໍ່ໜ້າ 8...

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບອົງການປົກຄອງແຂວງໄຊຍະບູລີ




(ສພຊ) ໃນວັນທີ 6 ມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງແຂວງໄຊຍະບູລີ ໄດ້ຈັດກອງປະຊຸມຮ່ວມລະຫວ່າງ ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ກັບຫ້ອງວ່າການປົກຄອງ ແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ເພັງນິລັນ ຄໍາພັນເພັງ ປະທານ ສພຂ ແລະ ທ່ານ ສົມຈິດ ຈັນທະວົງ ຮອງເຈົ້າແຂວງແຂວງໄຊຍະບູລີ; ເຂົ້າຮ່ວມມີຄະນະປະຈໍາພັກແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7, ສະມາຊິກສະພາປະຊາຊົນແຂວງ, ມີຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນຂອງການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະພາແຫ່ງຊາດ (ສພຊ) ແລະ ສພຂ, ບົດລາຍງານຂອງອົງການປົກຄອງແຂວງ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ພ້ອມທັງຄົ້ນຄວ້າບັນຫາສໍາຄັນຈໍານວນໜຶ່ງ ເພື່ອນໍາເຂົ້າກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX.

ຫລັງຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນປະກອບຄໍາຄິດຄໍາເຫັນໃສ່ບົດລາຍງານດັ່ງກ່າວຢ່າງກົງໄປກົງມາ.

ໃນຕອນທ້າຍ, ປະທານກອງປະຊຸມຍັງໄດ້ມີຄໍາເຫັນຊີ້ນໍາ ທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຜ່ານມານັ້ນກໍເຫັນວ່າເຮັດສໍາເລັດໃນຫລາຍດ້ານ ແຕ່ວ່າກໍຍັງມີອັນທີ່ຕ້ອງປັບປຸງໃນບາງພາກສ່ວນເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງເພື່ອໃຫ້ສາມາດປະຕິບັດໄດ້ໃນຕໍ່ໜ້າ ພ້ອມທັງນໍາເອົາເນື້ອໃນຈິດໃຈກອງປະຊຸມໃນນີ້ນໍາໄປສະເໜີຕໍ່ຂັ້ນເທິງ ເພື່ອໃຫ້ເກີດດອກອອກຜົນໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ.

(ອິນທີ ຊຽວສີຟ້າ)

# ຄວສຜ ເຄື່ອນໄຫວວຽກງານຢູ່ແຫລ່ງທ່ອງທ່ຽວຕ່າງໆ ຂອງແຂວງຫລວງພະບາງ



(ສພຂ) ເມື່ອບໍ່ດົນຜ່ານມານີ້, ຄະນະກໍາມະການວັດທະນະທໍາ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ໄດ້ເຄື່ອນໄຫວຕິດຕາມ, ກວດກາ ແລະ ຊຸກຍູ້ການບໍລິຫານຈັດການ ຢູ່ແຫລ່ງທ່ອງທ່ຽວ ທໍາມະຊາດ ຫລວງພະບາງ, ນໍ້າຕົກຕາດກວາງຊີ ແລະ ຖໍ້າຕິ່ງ ເຊິ່ງນໍາໂດຍທ່ານ ປອ. ກໍລະກັນ ພົມມະວົງ ປະທານ ຄວສຜ; ເຂົ້າຮ່ວມມີທ່ານ ສຸວິລັດ ພັນສຸເດດ ຮອງປະທານ ຄວສຜ, ມີຮອງຫົວໜ້າພະແນກຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ບັນດາຫົວໜ້າ-ຮອງຫົວໜ້າຂະແໜງ, ອໍານວຍການທໍາພິພິຕະພັນແຫ່ງຊາດຫລວງພະບາງ, ຫົວໜ້າ-ຮອງຫົວໜ້າຫ້ອງການຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງປາກອູ, ເມືອງຈອມເພັດ, ຜູ້ປະກອບການບໍລິສັດໄຟຟ້າຕາດກວາງຊີ ຕະຫລອດຮອດພະນັກງານວິຊາການ ແລະ ພະນັກງານຮັບຜິດຊອບຢູ່ແຫລ່ງທ່ອງທ່ຽວດັ່ງກ່າວເຂົ້າຮ່ວມ.

ການເຄື່ອນໄຫວແຕ່ລະຈຸດ ແມ່ນໄດ້ຮັບຟັງການລາຍງານຈາກທ່ານຜູ້ຕາງໜ້າພະແນກຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ, ອໍານວຍການທໍາພິພິຕະພັນແຫ່ງຊາດຫລວງພະບາງ ແລະ ຕາງໜ້າຫ້ອງການຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງຈອມເພັດ ແລະ ເມືອງປາກອູກ່ຽວກັບການແບ່ງຄວາມຮັບຜິດຊອບໃນການບໍລິຫານຈັດການຢູ່ແຫລ່ງທ່ອງທ່ຽວ, ການກະກຽມຄວາມພ້ອມ ເພື່ອຮອງຮັບນັກທ່ອງທ່ຽວພາຍຫລັງ ສປປລາວ ເປີດປະເທດເຕັມຮູບແບບ, ການຊ່ວຍເຫລືອຈາກພາກລັດ ຫລື ເອກະຊົນ ໃນການຟື້ນຟູແຫລ່ງທ່ອງທ່ຽວ, ການເກັບຄ່າທໍານຽມເຂົ້າຊົມແຫລ່ງທ່ອງທ່ຽວແຕ່ລະແຫ່ງ, ການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງທ່ອງທ່ຽວ ແລະ ບັນຫາອື່ນໆ.

ຜ່ານການຮັບຟັງການລາຍງານເຫັນວ່າ ຢູ່ແຕ່ລະແຫລ່ງທ່ອງທ່ຽວແມ່ນມີລະບົບການຈັດຕັ້ງ ແລະ ມີການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ປົກປັກຮັກ ເປັນຕົ້ນແມ່ນວຽກງານຄຸ້ມຄອງ, ສ້ອມແປງ ແລະ ສິ່ງແວດລ້ອມ, ວຽກງານຮັກສາຄວາມປອດໄພ ແລະ ບໍລິຫານ, ວຽກງານຄຸ້ມຄອງພິພິທະພັນ, ວຽກງານດູແລຮັກສາຄວາມສະຫງົບ-ປອດໄພ, ວຽກງານອະນາໄມຮັກສາຄວາມສະອາດ, ເກັບມ້ຽນຂີ້ເຫຍື້ອ, ວຽກງານອະນາໄມຫ້ອງນໍ້າ, ປູກດອກໄມ້, ວຽກງານຍາມປະຕູເຂົ້າຊົມຕາດ ແລະ ຈຸດອາບນໍ້າຕ່າງໆ; ທໍາພິພິຕະພັນແຫ່ງຊາດຫລວງພະບາງ ມີພະນັກງານທັງໝົດ 22 ທ່ານ, ແຫລ່ງທ່ອງທ່ຽວນໍ້າຕົກຕາດກວາງຊີ ມີພະນັກງານ 12 ທ່ານ; ແຫລ່ງທ່ອງທ່ຽວຖໍ້າຕິ່ງ ແມ່ນມີການແຕ່ງຕັ້ງຄະນະຮັບຜິດຊອບເວນຍາມ ແລະ ອະນາໄມ ໂດຍເອົາປະຊາຊົນຢູ່ໃນ 4 ບ້ານ ໃນນັ້ນ ເມືອງປາກອູ 2 ບ້ານຄື ບ້ານປາກອູ ແລະ ບ້ານຄົກ, ເມືອງຈອມເພັດ 2 ບ້ານຄືບ້ານມ່ວງແກ້ວ ແລະ ບ້ານຫ້ວຍກໍ້ ເພື່ອຜັດປ່ຽນກັນເວນຍາມ ແລະ ອະນາໄມ; ເພື່ອກະກຽມຄວາມພ້ອມ ເພື່ອຮອງຮັບນັກທ່ອງທ່ຽວ ພາຍຫຼັງ ສປປລາວ ເປີດປະເທດເຕັມຮູບແບບ ບັນດາແຫລ່ງທ່ອງທ່ຽວໄດ້ມີການປັບປຸງລະບົບການບໍລິການ, ອະນາໄມຕົ້ນໄມ້ໂກກ ແລະ ປັບປຸງຫົວທັດໃຫ້ມີຄວາມສະອາດສວຍງາມ, ປັບປຸງສິ່ງອໍານວຍຄວາມສະດວກ ເປັນຕົ້ນແມ່ນບ່ອນນັ່ງຊົມ, ສະຖານທີ່ຈອດລົດ, ເຝິກອົບຮົມການປະຖົມພະຍາບານເບື້ອງຕົ້ນໃຫ້ພະນັກງານຄຸ້ມຄອງແຫລ່ງທ່ອງທ່ຽວ.

ຄຽງຄູ່ກັບນັ້ນ. ຍັງເຫັນວ່າ ແຫລ່ງທ່ອງທ່ຽວ ຍັງບໍ່ທັນພັດທະນາສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວ ຍ້ອນທຶນຮອນທີ່ຈະມານໍາໃຊ້ເຂົ້າໃນການບູລະນະ ຫລື ປັບປຸງບໍ່ພຽງພໍ, ການຄຸ້ມຄອງປ່າໄມ້ ແລະ ສິ່ງແວດລ້ອມຢູ່ບໍລິເວນຖໍ້າຕິ່ງ ຍັງເຮັດບໍ່ທັນໄດ້ດີ, ຫ້ອງນໍ້າຮັບໃຊ້ນັກທ່ອງທ່ຽວຢູ່ຖໍ້າຕິ່ງຄວນໄດ້ຮັບການປັບປຸງ ແລະ ບັນຫາການປະຕິບັດນະໂຍບາຍຕໍ່ພະນັກງານທີ່ຮັບຜິດຊອບຢູ່ 3 ແຫລ່ງທ່ອງທ່ຽວຍັງເຫັນວ່າມີລັກສະນະຈໍາກັດ.

ການເຄື່ອນໄຫວຄັ້ງນີ້, ທ່ານ ປອ. ກໍລະກັນ ພົມມະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະຮັບຜິດຊອບແຫລ່ງທ່ອງທ່ຽວ ແລະ ຮຽກຮ້ອງໃຫ້ຄະນະຮັບຜິດຊອບເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງທ່ອງທ່ຽວໃຫ້ມີຄວາມຍືນຍົງ, ມີຄວາມສວຍງາມ, ເຮັດໃຫ້ນັກທ່ອງທ່ຽວທີ່ມາທ່ຽວຊົມມີຄວາມປອດໄພ ແລະ ປະທັບໃຈ ເພື່ອເປັນການດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວຊົມໃຫ້ນັບມື້ຫລາຍຂຶ້ນ.

(ຄໍາດີ ພັນທະລີ)

# ສພຂ ຫົວພັນ ມອບທຶນກໍ່ສ້າງນໍ້າລິນ ແລະ ຊ່ວຍເຫລືອຄອບຄົວຜູ້ຖືກອັກຄີໄພ



(ສພຊ) ຕອນບ່າຍວັນທີ 8 ມິຖຸນາ 2022 ນໍາໂດຍທ່ານ ສົມສັກ ດອນຈານິດ ຮອງປະທານສະພາປະຊາຊົນ ແຂວງຫົວພັນ ພ້ອມດ້ວຍຄະນະ ແລະ ສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງສົບເບົາ ຕາງໜ້າໃຫ້ທ່ານ ແກ້ວຈະເລີນ ເຊຍຢົ້ງຢ່າງ ຮອງປະທານກໍາມາທິການບັນດາເຜົ່າ, ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 8 ແຂວງຫົວພັນ ມອບເງິນສົດ ຈໍານວນ 10,5 ລ້ານກີບ ມອບໃຫ້ອົງການປົກຄອງ ແລະ ປະຊາຊົນບ້ານເມືອງຮັງ ເມືອງສົບເບົາ ແຂວງຫົວພັນ ເພື່ອນໍາໃຊ້ເຂົ້າໃນການກໍ່ສ້າງປັບປຸງນໍ້າລິນເຂົ້າບ້ານ ເຊິ່ງກ່າວມອບໂດຍທ່ານ ສົມສັກ ດອນຈານິດ ແລະ ກ່າວຮັບໂດຍນາຍບ້ານ ບ້ານດັ່ງກ່າວ ພ້ອມດ້ວຍພໍ່ແມ່ປະຊາຊົນພາຍໃນບ້ານເຂົ້າຮ່ວມເປັນສັກຂີພິຍານ. ທັງນີ້, ກໍເພື່ອແກ້ໄຂຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໃຫ້ນັບມື້ດີຂຶ້ນ.

ໂອກາດດຽວກັນນີ້, ທ່ານ ສົມສັກ ດອນຈານິດ ຍັງມີຄໍາເຫັນໂອ້ລົມຕໍ່ອໍານາດການປົກຄອງບ້ານ ໃນການນໍາໃຊ້ຮ່ວງເງິນດັ່ງກ່າວ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ.

ໃນວັນທີ 12 ມິຖຸນາ, ທ່ານ ສົມສັກ ດອນຈານິດ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງວຽງໄຊ ແລະ ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍທີມງານ ຍັງໄດ້ຕາງໜ້າສະພາປະຊາຊົນແຂວງ ມອບເຄື່ອງຊ່ວຍເຫລືອທີ່ຈໍາເປັນ ແລະ ຮີບດ່ວນໃຫ້ຄອບຄົວທີ່ຖືກອັກຄີໄພ (ໄຟໄໝ້ເຮືອນ) ຂອງພໍ່ເຖົ້າ ສີງທອງ ເຊິ່ງໃນຄອບຄົວມີສະມາຊິກທັງໝົດ 5 ຄົນ ຍິງ 2 ຄົນ ຢູ່ບ້ານບັກ ເມືອງວຽງໄຊ ແຂວງຫົວພັນ.

ເຄື່ອງທີ່ນໍາໄປຊ່ວຍເຫລືອຄັ້ງນີ້, ປະກອບມີເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ ແລະ ເງິນສົດຈໍານວນ 1 ລ້ານກີບ ລວມມູນຄ່າການຊ່ວຍເຫລືອທັງໝົດ 2,8 ລ້ານກີບ.

ເຫດການດັ່ງກ່າວ ໄດ້ເກີດຂຶ້ນຕອນແລງຂອງວັນທີ 11 ມິຖຸນາ 2022 ຕາມການກວດກາຂອງເຈົ້າໜ້າທີ່ຕົວຈິງ ສາເຫດແມ່ນເກີດຂຶ້ນ ຈາກໄຟຟ້າລັດວົງຈອນ ເຮັດໃຫ້ເກີດໄຟໄໝ້ເຮືອນ 1 ຫລັງ ແລະ ເຄື່ອງໃຊ້, ວັດຖຸພາຍໃນເຮືອນ ລວມມູນຄ່າເສຍຫາຍທັງໝົດ 175 ລ້ານກວ່າກີບ.

ໃນໂອກາດນີ້, ທ່ານ ສົມສັກ ດອນຈານິດ ພ້ອມດ້ວຍທີມງານ ຍັງໄດ້ສະແດງຄວາມເສຍໃຈຕໍ່ເຫດການທີ່ເກີດຂຶ້ນ ພ້ອມທັງຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນພາຍໃນບ້ານ ຈົ່ງພ້ອມກັນຊ່ວຍເຫລືອເບິ່ງແຍງຄອບຄົວດັ່ງກ່າວ ແລະ ພ້ອມກັນມີສະຕິໃນການນໍາໃຊ້ໄຟຟ້າໃຫ້ຖືກຕ້ອງຕາມຫລັກການເຕັກນິກວິຊາການຂອງລັດວິສາຫະກິດໄຟຟ້າລາວກໍານົດໄວ້.

(ນັກຂ່າວ ສພຂ ຫົວພັນ)

# ມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງໜ່ວຍພັກ ສພຂ ບໍ່ແກ້ວ



(ສພຊ) ເມື່ອຕົ້ນເດືອນມິຖຸນາ 2022 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນນາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ແໜັກແໜ້ນ ປະຈໍາປີ 2021 ຂອງໜ່ວຍພັກ ສພຂ ບໍ່ແກ້ວ ພາຍໃຕ້ການການເປັນປະທານຂອງສະຫາຍ ນາງ ດາວ ໄຊເສດຖາ ກໍາມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານ ສພຂ; ເຂົ້າຮ່ວມໂດຍສະຫາຍ ປອ. ບົວຄົງ ນາມມະວົງ ກໍາມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆບໍ່ແກ້ວ ແລະ ແຂກຖືກເຊີນຈາກຄະນະກວດກາພັກ-ລັດ, ຄະນະຈັດຕັ້ງແຂວງ ພ້ອມດ້ວຍຄະນະໜ່ວຍພັກ ແລະ ສະມາຊິກພັກສົມບູນ-ສໍາຮອງ ເຂົ້າຮ່ວມຈໍານວນ 28 ສະຫາຍ ຍິງ10 ສະຫາຍ.

ພິທີດັ່ງກ່າວ, ຄະນະຈັດຕັ້ງພິທີໄດ້ຂຶ້ນກ່າວຈຸດປະສົງ ແລະ ຜ່ານມະຕິຕົກລົງຂອງຄະນະປະຈໍາພັກແຂວງ ວ່າດ້ວຍການຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ 2021 ແລະ ມອບໃບຢັ້ງຢືນຄັ້ງນີ້ ໂດຍສະຫາຍ ປອ. ບົວຄົງ ນາມມະວົງ ຂຶ້ນຮັບໂດຍສະຫາຍ ນາງ ດາວ ໄຊເສດຖາ.

ໃນຕອນທ້າຍພິທີ, ສະຫາຍເລຂາພັກແຂວງ, ເຈົ້າແຂວງໆບໍ່ແກ້ວ ຍັງໄດ້ໃຫ້ຄໍາໂອ້ລົມ ແລະ ມີທິດຊີ້ນໍາຕໍ່ໜ່ວຍພັກຂອງ ສພຂ ໂດຍສະຫາຍໄດ້ເນັ້ນໜັກຫລາຍບັນຫາສືບຕໍ່ຮັກສາມູນເຊື້ອ ແລະ ໃຫ້ເອົາໃຈໃສ່ບຸກບືນກໍ່ສ້າງ. ພ້ອມນັ້ນ, ສະຫາຍເລຂາໜ່ວຍພັກ ສພຂ ກໍຂຶ້ນກ່າວຮັບຄໍາໂອ້ລົມ ແລະ ຢັ້ງຢືນວ່າຈະສືບຕໍ່ກໍ່ສ້າງໃຫ້ໜ່ວຍພັກກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນປີຕໍ່ໆໄປ.

(ນາງ ຈັນຖະໜອມ ແກ້ວມະນີ)

# ສພຂ ຫລວງນໍ້າທາ ມອບເງິນຊ່ວຍເຫລືອປະຊາຊົນ ເກືອບ 136 ລ້ານກີບ



ທ່ານ ຄໍາຟອງ ອິນມະນີ ປະທານສະພາປະຊາຊົນແຂວງ (ສພຂ) ຫລວງນໍ້າທາ ໄດ້ຕາງໜ້າໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 3 ກໍຄື ສພຂ ຫລວງນໍ້າທາ ໃຫ້ສໍາພາດເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລຶກ ມາຮອດປັດຈຸບັນ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຫລາຍດ້ານ ເປັນຕົ້ນແມ່ນ:

**1. ດ້ານນິຕິບັນຍັດ ແລະ ນິຕິກໍາ:** ຜ່ານມາ ສສຊ ໄດ້ເຂົ້າຮ່ວມໃນການທາບທາມ ບັນດາຮ່າງກົດໝາຍຕ່າງໆ ຮ່ວມກັບ ສພຊ, ບັນດາກະຊວງ ຄົ້ນຄວ້າພິຈາລະນາຮັບຮອງເອົາຮ່າງກົດໝາຍຕ່າງໆ ໃນກອງປະຊຸມສະໄໝສາມັນຂອງ ສພຊ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາ, ຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ ໃນກອງປະຊຸມຄັ້ງປະຖົມມະລຶກ ສພຊ ມີທັງໝົດ 96 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 38 ສະບັບ ແລະ ກົດໝາຍປັບປຸງ 58 ສະບັບ, ຍັງໄດ້ຄົ້ນຄວ້າປະກອບຄໍາເຫັນໃສ່ບັນດາຮ່າງກົດໝາຍໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ເທື່ອທີ 2 ຂອງ ສພຊ ຊຸດທີ IX ທັງໝົດ 13 ສະບັບ. ນອກຈາກນັ້ນ, ຄະນະ ສສຊ ປະຈໍາເຂດເລືອກຕັ້ງ ຮ່ວມກັບ ສພຂ ພິຈາລະນາ, ຮັບຮອງເອົາແຜນການສ້າງ ແລະ ປັບປຸງຂໍ້ຕົກລົງຂອງທ່ານເຈົ້າແຂວງ ໃນໄລຍະ 5 ປີ (2021-2025) ເຊິ່ງມີທັງໝົດ 16 ສະບັບ ໃນນັ້ນ, ສ້າງໃໝ່ 10 ສະບັບ ແລະ ປັບປຸງ 6 ສະບັບ, ພິຈາລະນາຮັບຮອງເອົານິຕິກໍາຂອງທ້ອງຖິ່ນ ຈໍານວນ 1 ສະບັບຄື: ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍກອງທຶນສັງຄົມ-ສົງເຄາະ ທັງໄດ້ສົມທົບກັບອົງການປົກຄອງແຂວງ ຄົ້ນຄວ້າບັນດາຮ່າງຂໍ້ຕົກລົງຈໍານວນໜຶ່ງ ເພື່ອນໍາເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຕື່ມອີກ. ນອກຈາກນັ້ນ, ຍັງໄດ້ປະສານສົມທົບກັບອົງການປົກຄອງແຂວງ ແລະ ສພຂ ແລະ ພາກສ່ວນກ່ຽວຂ້ອງ ປະກອບຄໍາເຫັນໃສ່ຮ່າງກົດໝາຍ 14 ສະບັບ ແລະ ຈັດຕັ້ງປະເມີນ 4 ກົດໝາຍ ທີ່ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

**2. ການຕົກລົງບັນຫາສໍາຄັນຂອງຊາດ ແລະ ທ້ອງຖິ່ນ:** ຄະນະ ສສຊ ປະຈໍາເຂດເລືອກຕັ້ງທີ 3 ໄດ້ເຂົ້າຮ່ວມ ແລະ ພິຈາລະນາ, ຮັບຮອງເອົາບັນຫາສໍາຄັນຂອງຊາດ ໃນກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ, ສພຂ, ກອງປະຊຸມສະໄໝສາມັນເທື່ອທີ 1 ແລະ ເທື່ອທີ 2 ຂອງ ສພຊ, ສພຂ ເປັນຕົ້ນແມ່ນກົງຈັກ ແລະ ບຸກຄະລາກອນຂອງ ສພຊ ຊຸດທີ IX, ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ; ແຜນພັດທະນາເສດຖະກິດສັງ-ຄົມ, ແຜນງົບປະມານໃນແຕ່ລະປີຂອງລັດຖະບານ, ຂອງແຂວງ, ວຽກງານຂອງສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດກາລັດ, ອົງການກວດສອບປະຈໍາພາກ ແລະ ບັນຫາສໍາຄັນອື່ນໆ.

**3. ດ້ານການຕິດຕາມກວດກາ:** ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດພາລະບົດບາດໃນການຕິດຕາມໃນການຕິດຕາມກວດກາ ເຊັ່ນ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ-ກົດໝາຍຂອງອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການສືບສວນ-ສອບສວນ, ຕິດຕາມກວດກບັນດາໂຄງການລົງທຶນຂອງລັດຖະບານ ຕັ້ງຢູ່ທອງຖິ່ນ, ໂຄງການຍົກຍ້າຍຈັດສັນຜູ້ຖືກຜົນກະທົບຈາກການກໍ່ສ້າງເຂື່ອນໄຟຟ້ານໍ້າທາ 1, ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຊ່ວງທີ່ຜ່ານແຂວງຫລວງນໍ້າທາ, ໂຄງການຟື້ນຟູ-ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າທາ 1, ຕິດຕາມກວດກາບັນດາມະຕິຂອງ ສພຊ, ສພຂ, ຕິດຕາມກວດກາການແກ້ໄຂ ແລະ ການປ້ອງພະຍາດໂຄວິດ-19, ລົງຕິດຕາມກວດກາວຽກງານເຜົ່າ ແລະ ສາດສະໜາຢູ່ 3 ເມືອງຄື: ເມືອງຫລວງນໍ້າທາ, ເມືອງລອງ ແລະ ເມືອງວຽງພູຄາ, ຕິດຕາມກວດກາຮ່ວມກັບບັນດາກໍາມາທິການ ສພຊ, ຕິດຕາມກວດກາຂອງຄະນະ ສສຊ ປະຈໍາເຂດເລືອກຕັ້ງ, ຕິດຕາມກວດກາຮ່ວມກັບ ສພຂ.

ທ່ານຍັງໃຫ້ຮູ້ຕື່ມວ່າ: ແຕ່ກອງປະຊຸມຄັ້ງປະຖົມມະລຶກ ມາຮອດປັດຈຸບັນ ຄະນະ ສສຊ ປະຈໍາເຂດເລືອກຕັ້ງທີ 3 ແຂວງຫລວງນໍ້າທາ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ມະຕິຂອງ ສພຊ, ສພຂ ແລະ ບັນດານິຕິກໍາໃຕ້ກົດໝາຍ ໄດ້ນໍາເອົາເນື້ອໃນຜົນສໍາເລັດຂອງກອງປະຊຸມ ຄັ້ງປະຖົມມະລຶກ, ກອງປະຊຸມສະໄໝວິສາມັນ, ກອງປະຊຸມສະໄໝສາມັນເທື່ອທີ 2 ສພຊ, ສພຂ ແລະ ກົດໝາຍຈໍານວນໜຶ່ງ ລົງເຜີຍແຜ່ໃຫ້ພະນັກງານ,ທະຫານ,ຕໍາຫລວດ, ພໍ່ແມ່ປະຊາຊົນໄດ້ທັງໝົດ 65 ຈຸດ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 6.678 ເທື່ອຄົນ ຍິງ 2.106 ເທື່ອຄົນ. ນອກຈາກນັ້ນ ຍັງໄດ້ນໍາເອົາເຄື່ອງນຸ່ງຫົ່ມ, ອຸປະກອນການຮຽນ, ເຄື່ອງກິລາ, ຜ້າອັດປາກ, ເຈວລ້າງມື ແລະ ເຄື່ອງອຸປະໂພກ-ບໍລິໂພກແລະອື່ນໆ ມອບໃຫ້ພໍ່ແມ່ປະຊາຊົນຢູ່ເຂດຫ່າງໄກສອກຫລີກ ຄິດເປັນມູນຄ່າ ທັງໝົດ 135,8 ລ້ານກວ່າກີບ. ຜົນສໍາເລັດດັ່ງກ່າວ ເກີດຂຶ້ນໄດ້ ຍ້ອນມີເງື່ອນໄຂສະດວກຫລາຍຢ່າງ ເນື່ອງຈາກມີລັດຖະທໍາມະນູນ, ກົດໝາຍ, ບັນດານິຕິກໍາໃຕ້ກົດໝາຍຈໍານວນໜຶ່ງ ເປັນບ່ອນອີງໃນການເຄື່ອນໄຫວວຽກງານ; ໄດ້ຮັບການຊີ້ນໍາຈາກຄະນະປະຈໍາ ສພຊ, ຄະນະປະຈໍາພັກແຂວງ ໃນການເຄື່ອນໄຫວວຽກງານ; ມີພາຫະນະ, ອາຄານ, ສະຖານທີ່, ງົບປະມານຈໍານວນໜຶ່ງໃນການປະຕິບັດໜ້າທີ່ວຽກງານ; ຄະນະ ສສຊ ປະຈໍາເຂດ, ຄະນະປະຈໍາ ສພຂ, ບັນດາຄະນະກໍາມະການ, ຄະນະເລຂາທິການ ໄດ້ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ; ກົງຈັກເສນາທິການເອົາໃຈໃສ່ໃນການເປັນເສນາທິການທີ່ດີໃຫ້ແກ່ຄະນະ ສສຊ ກໍຄື ສພຂ ແລະ ໄດ້ຮັບການຮ່ວມມືຈາກທຸກພາກສ່ວນໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ.



# ຊຸກຍູ້ການຈັດຕັ້ງປະຕິບັດຂົງເຂດເສດຖະກິດ, ແຜນການ ແລະ ການເງິນ ເມືອງພູວົງ




(ສພຊ) ຕົ້ນເດືອນມິຖຸນານີ້, ທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ (ສພຂ) ອັດຕະປື ແລະ ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ (ຄສຜງ). ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2022 ໃນຂົງເຂດເສດຖະກິດ, ແຜນການ ແລະ ການເງິນ ຢູ່ເມືອງພູວົງ ແຂວງອັດຕະປື; ເຂົ້າຮ່ວມມີທ່ານ ສຸລິຈັນ ໂຊກຄໍາຈັນ ເຈົ້າເມືອງເມືອງພູວົງ, ມີບັນດາທ່ານຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈໍາເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງ.

ທ່ານ ສຸລິຈັນ ໂຊກຄໍາຈັນ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 4 ເດືອນຕົ້ນປີ 2022 ແລະ ທິດທາງແຜນວຽກຈຸດສຸມ 8 ເດືອນຕໍ່ໜ້າ ວ່າ: ອັດຕາຂະຫຍາຍຕົວລວມຍອດຜະລິດຕະພັນພາຍໃນ (GDP) ປີ 2022 ເພີ່ມຂຶ້ນຢູ່ໃນລະດັບ 6,13% ຫລຸດແຜນ 1,37% (ຕາມມະຕິກອງປະຊຸມໃຫ່ຍຂອງເມືອງ 7,5%), ປັດໃຈສົ່ງຜົນໃຫ້ອັດຕາເງິນເຟີ້ ມີການເໜັງຕີງຍ້ອນ ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫລົ້າເພີ່ມຂຶ້ນ 7,49% ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 5,20% ໝວດຄົມມະນາຄົມ ແລະ ຂົນສົ່ງ ເພີ່ມຂຶ້ນ 4,61% ໝວດສິນຄ້າ ແລະ ການບໍລິການອື່ນໆ ເພີ່ມຂຶ້ນ 13,03%, ການລົງທຶນຂອງລັດສຸມໃສ່ຄົ້ນຄວ້າອໍານວຍຄວາມສະດວກໃນການສໍາລະໂຄງການລົງທຶນຂອງລັດທີ່ສະພາຮັບຮອງ ແລະ ໂຄງການທີ່ແຂວງ ແລະ ເມືອງອະນຸມັດໃຫ້ຈັດຕັ້ງປະຕິບັດໃນ 4 ເດືອນຜ່ານມາ ຈໍານວນ 5 ໂຄງການມູນຄ່າ 1.596 ລ້ານກວ່າກີບ, ໄດ້ສຸມໃສ່ 84 ວຽກຫລັກ ໄດ້ຈັດຕັ້ງປະຕິບັດ 54 ວຽກທຽບໃສ່ແຜນໄດ້ 64,28% ເປັນຕົ້ນແມ່ນສະໜອງອຸປະກອນ ແລະ ແນວພັນພືດຜັກສວນຄົວ 7 ບ້ານມີ 315 ຄອບຄົວ, ບຸກເບີກສວນປູກຫຍ້າອາຫານສັດ 5 ບ້ານ 72 ຄອບຄົວ, ເນື້ອທີ່ 36 ຮຕ, ປັດຈຸບັນສໍາເລັດ 3 ບ້ານ 32 ຄອບຄົວ, ເນື້ອທີ່ 16 ຮຕ, ຕິດຕາມເກັບກູ້ມັນຕົ້ນ 14 ບ້ານ ມີ 214 ຄອບຄົວ, ມີເນື້ອທີ່ປູກ 475.38 ຮຕ ລື່ນແຜນ 334.38 ຮຕ, ຜົນຜະລິດ 9.336,46 ໂຕນ ລື່ນແຜນ 6.454,46 ໂຕນ, ເກັບກູ້ອ້ອຍເນື້ອທີ່ປູກ 445,5 ຮຕ ລື່ນແຜນ 345,5 ຮຕ ຜົນຜະລິດໄດ້ 26.478 ໂຕນ.

ພ້ອມນັ້ນ, ກໍໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຄໍາເຈາະຈີ້ມຈາກປະທານ ສພຂ ພ້ອມທັງໄດ້ແລກປ່ຽນຄໍາຄິດຄໍາເຫັນຕໍ່ບັນດາຂໍ້ຫຍຸ້ງຍາກແລະຄົງຄ້າງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງເມືອງ.

ຕອນທ້າຍ, ປະທານ ສພຂ ໄດ້ເນັ້ນໃຫ້ເອົາໃຈໃສ່ຄຸ້ມຄອງການຈັດເກັບລາຍຮັບ, ຄຸ້ມຄອງສິນຄ້າທີ່ມີທ່າອ່ຽງເໜັງຕີງໃນປັດຈຸບັນ, ວາງມາດຕະການຄຸ້ມຄອງບໍລິການນໍ້າມັນຢ່າງເຂັ້ມງວດ, ເພີ່ມທະວີຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລະບຽບກົດໝາຍໃຫ້ມີຄວາມສັກສິດ, ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ.

(ວິນັດ)

# ສພຂ ຊຽງຂວາງ ເປີດບັ້ນແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ



(ສພຊ) ເມື່ອຕົ້ນເດືອນມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມເປີດບັ້ນແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ ປະຈໍາປີ 2022 ໂດຍການເປັນປະທານຂອງທ່ານ ວຽງໄຊ ສີວິໄລ ຮອງປະທານ ສພຂ, ມີຄະນະປະຈໍາສະພາປະຊາຊົນແຂວງ, ບັນດາຄະນະກໍາມະການ, ຄະນະເລຂາທິການ, ພະແນກພາຍໃນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ ສພຂ ເຂົ້າຮ່ວມ.

ເພື່ອເປັນການຊຸກຍູ້ ແລະ ສ້າງໃຫ້ພະນັກງານ-ລັດຖະກອນຂອງ ສພຂ ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງໜັກແໜ້ນດ້ວຍຕົນເອງ, ມີສະຕິເຄົາລົບຕໍ່ການຈັດຕັ້ງ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ, ມີຄວາມຕື່ນຕົວໃນການປະຕິບັດໜ້າທີ່, ຍົກສູງໃນການສ້າງສາພັດທະນາຕົນເອງໃຫ້ກາຍເປັນຄົນທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສົມທໍາປະຕິວັດ ແລະ ເປັນແບບຢ່າງທີ່ດີຕາມລະບຽບລັດຖະກອນວາງອອກ ແລະ ເປັນການສົ່ງເສີມການປະຕິບັດນະໂຍບາຍຍ້ອງຍໍຜົນງານຕ່າງໆ ໃຫ້ແກ່ການຈັດຕັ້ງ ແລະ ບຸກຄົນດີເດັ່ນ ຕິດພັນກັບການສ້າງຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ, ແທດເໝາະກັບຜົນງານຕົວຈິງ ຢ່າງເປັນຂະບວນຟົດຟື້ນ ແລະ ຕໍ່ເນື່ອງ.

ກອງປະຊຸມໄດ້ຜ່ານແຜນແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາຂອງ ສພຂ ປະຈໍາປີ 2022 ເພື່ອບັນລຸຕາມແຜນການແຂ່ງຂັນຍ້ອງຍໍຂອງ ສພຂ ປະຈໍາປີ 2022 ໄດ້ວາງ 4 ຄາດໝາຍຄື: ສູ້ຊົນຈັດຕັ້ງປະຕິບັດບັນດາວຽກງານທັງໝົດໃນ ສພຂ ໃຫ້ສໍາເລັດ 85% ຂຶ້ນໄປ, ຮັບປະກັນປະຕິບັດຕາມແຜນວຽກ ແລະ ຕາມກໍານົດເວລາ, ຮັບປະກັນຜົນສໍາເລັດວຽກງານ ທາງດ້ານປະລິມານ ແລະ ຄຸນນະພາບ, ຮັບປະກັນວຽກງານໃຫ້ມີຄວາມຖືກຕ້ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນທີ່ຮັບຜິດຊອບ ແລະ ກອງປະຊຸມຍັງໄດ້ຈັບມືເປີດບັ້ນແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ ປະຈໍາປີ 2022 ຂອງ ສພຂ ຂຶ້ນຢ່າງເປັນທາງການ. ໃນໂອກາດດັ່ງກ່າວ, ຍັງໄດ້ຮັບຟັງການແນະນໍາການຈັດຕັ້ງປະຕິບັດບັ້ນແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ ຈາກຕາງໜ້າພະແນກພາຍໃນແຂວງ ເພື່ອເຮັດໃຫ້ແຜນການທີ່ໄດ້ວາງໄວ້ ໃຫ້ໄດ້ຮັບຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້.

ໃນຕອນທ້າຍ, ທ່ານ ວຽງໄຊ ສີວິໄລ ໄດ້ມີຄໍາເຫັນໂອ້ລົມຕໍ່ພິທີ ເຊິ່ງທ່ານໄດ້ໃຫ້ພະນັກງານ ສພຂ ຈົ່ງສືບຕໍ່ພັດທະນາຕົນເອງໃນການການຊອກຮູ້ຮໍ່າຮຽນວຽກງານຈາກດ້ານຕ່າງໆ ເພື່ອນໍາໃຊ້ເຂົ້າວຽກງານໃຫ້ດີຂຶ້ນກວ່າເກົ່າ, ກໍ່ສ້າງຊ່ວຍເຫລືອເຊິ່ງກັນແລະກັນ, ເອົາໃຈໃສ່ປະຕິບັດແຜນການແຂ່ງຂັນຍ້ອງຍໍຂອງ ສພຂ ປະຈໍາປີ 2022 ໄດ້ວາງ 4 ຄາດໝາຍ ໃຫ້ມີຜົນສໍາເລັດສູງ.

(ນາງ ສຸກສະຫວັນ ອິນທະແສງ)

## ສະເໜີ...

ດັ່ງກ່າວຢ່າງເປັນເຈົ້າການ, ແຕ່ຍ້ອນໃນປັດຈຸບັນ ສະພາບການທາງດ້ານເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ, ມີການເຊື່ອມໂຍງ-ເຊື່ອມຈອດກັບບັນດາປະເທດໃນພາກພື້ນ ແລະ ສາກົນ; ເຊິ່ງໄດ້ເຮັດໃຫ້ມີບຸກຄົນ ແລະ ກຸ່ມຄົນບໍ່ດີ ເຄື່ອນໄຫວຊື້-ຂາຍອາວຸດ ແລະ ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການມີລັກສະນະເພີ່ມຂຶ້ນ; ຫລາຍກໍລະນີ ມີລັກສະນະເປີດແປນ (ບໍ່ວ່າຈະຢູ່ໃນຮູບແບບທົ່ວໄປ ຫລື ຮູບແບບນຳໃຊ້ສື່ສັງຄົມອອນລາຍ ເປັນບ່ອນຊື້-ຂາຍ) ເຊິ່ງໄດ້ກາຍເປັນໜຶ່ງໃນບັນດາປາກົດການຫຍໍ້ທໍ້ທາງສັງຄົມ; ເຮັດໃຫ້ພວກຄົນບໍ່ດີໄດ້ຄອບຄອງ, ນຳໃຊ້ອາວຸດ ແລະ ວັດຖຸລະເບີດ ເຄື່ອນໄຫວກໍ່ອາຊະຍາກຳຕ່າງໆ ເປັນຕົ້ນ: ການຄາດຕະກຳ, ປຸ້ນຈີ້, ຊິງຊັບ ແລະ ນາບຂູ່ປະຊາຊົນທີ່ບໍລິສຸດ ເພື່ອຫວັງເອົາຊັບສິນທີ່ມີຄ່າ; ຕໍ່ກັບບັນຫາດັ່ງກ່າວ ໄດ້ສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ເຊິ່ງແຕະຕ້ອງເຖິງຊີວິດ, ສຸຂະພາບ ແລະ ຊັບສິນຂອງລັດ, ລວມໝູ່, ຂອງບຸກຄົນ ແລະ ອື່ນໆ.

ໃນການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໄລຍະຜ່ານມາ ຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບພວກເຮົາ ແມ່ນໄດ້ອີງໃສ່ນິຕິກຳສະເພາະ ເປັນຕົ້ນແມ່ນ: ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍລະບຽບການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດ ຢູ່ ສປປລາວ ສະບັບເລກທີ 39/ນຍ, ລົງວັນທີ 12 ກໍລະກົດ 2001; ຂໍ້ກຳນົດວ່າດ້ວຍລະບຽບການຄຸ້ມຄອງອາວຸດຍຸດໂທປະກອນ ສະບັບເລກທີ 3933/ກປທ, ລົງວັນທີ 20 ຕຸລາ 2015 (ຂອງກະຊວງປ້ອງກັນປະເທດ); ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງອາວຸດກະສູນ ສະບັບເລກທີ 681/ປກສ, ລົງວັນທີ 6 ກໍລະກົດ 2009 (ຂອງກະຊວງປ້ອງກັນຄວາມສະຫງົບ) ແລະ ຂໍ້ຕົກລົງວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫລື ສົ່ງອອກ ສະບັບເລກທີ 0333/ອຄ, ລົງວັນທີ 22 ມີນາ 2022 (ຂອງກະຊວງອຸດສາຫະກຳ ແລະ ການຄ້າ); ແຕ່ເຖິງຢ່າງໃດກໍຕາມ, ກົດໝາຍ ທີ່ເປັນບ່ອນອີງສະເພາະໃຫ້ວຽກງານດັ່ງກ່າວ ແມ່ນຍັງບໍ່ທັນມີ; ເຮັດໃຫ້ການຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກ ແລະ ຍັງບໍ່ທັນເປັນລະບົບເທົ່າທີ່ຄວນ ຖ້າທຽບໃສ່ບັນດາປະເທດໃນພາກພື້ນ ກໍຄືບັນດາປະເທດອ້ອມຂ້າງ ເປັນຕົ້ນ: ສປຈີນ ແລະ ສສ.ຫວຽດນາມ ແມ່ນມີກົດໝາຍຄຸ້ມຄອງເປັນອັນສະເພາະແລ້ວ.

ຍ້ອນເຫັນໄດ້ບັນຫາ ແລະ ປາກົດການຫຍໍ້ທໍ້ ທີ່ເກີດຂຶ້ນຈາກການນຳໃຊ້ອາວຸດ ແລະ ວັດຖຸລະເບີດທີ່ບໍ່ຖືກຕ້ອງໃນສັງຄົມ ທີ່ມີລັກສະນະເພີ່ມຂຶ້ນ; ລັດຖະບານ ຈຶ່ງໄດ້ມອບໃຫ້ກະຊວງປ້ອງກັນຄວາມສະຫງົບສົມທົບກັບກະຊວງປ້ອງກັນປະເທດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຮ່າງກົດໝາຍດັ່ງກ່າວຂຶ້ນມາຄຸ້ມຄອງ ໂດຍກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໃນທົ່ວສັງຄົມ ເພື່ອຮັບປະກັນໃຫ້ແກ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍຄືຂະແໜງການທີ່ກ່ຽວຂ້ອງປະຕິບັດວຽກງານດັ່ງກ່າວ ໄດ້ຢ່າງຖືກຕ້ອງ, ສອດຄ່ອງກັບກົດໝາຍ ແນໃສ່ເຮັດໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ປະກອບສ່ວນເຂົ້າໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດ.

**II. ສະພາບການຄົ້ນຄວ້າສ້າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.**

ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ສະບັບນີ້ ທາງກະຊວງປ້ອງກັນຄວາມສະຫງົບ ໄດ້ເລີ່ມຄົ້ນຄວ້າ, ເກັບກຳຂໍ້ມູນ, ໃນນັ້ນ, ກໍໄດ້ໄປແລກປ່ຽນບົດຮຽນ ຢູ່ ສປຈີນ, ຄົ້ນຄວ້າກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ອາວຸດ, ວັດຖຸລະເບີດຂອງ ສສ.ຫວຽດນາມ ແລະ ບັນດາສົນທິສັນຍາ, ສັນຍາສາກົນ ທີ່ ສປປລາວ ເປັນພາຄີກ່ຽວກັບວຽກງານດັ່ງກ່າວ, ເຊິ່ງການສ້າງກົດໝາຍສະບັບດັ່ງກ່າວ ສຳເລັດຂັ້ນພື້ນຖານມາແຕ່ປີ 2019; ຕາມແຜນການແລ້ວ ແມ່ນຈະໄດ້ເຂົ້າຜ່ານກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດໃນປີ 2020, ແຕ່ເນື່ອງຈາກວ່າມີ 2 ກົດໝາຍ ທີ່ເປັນບັນຫາຮີບດ່ວນ ແລະ ຈຳເປັນຕ້ອງໄດ້ຮີບຮ້ອນຄົ້ນຄ້ວາ, ສ້າງ ແລະ ປັບປຸງກ່ອນ ຄື: ກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ຕາມການມອບໝາຍຂອງລັດຖະບານ ພ້ອມທັງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ 2021-2023; ສະນັ້ນ, ຈຶ່ງໄດ້ເລື່ອນການຄົ້ນຄວ້າສ້າງຮ່າງກົດໝາຍສະບັບດັ່ງກ່າວນີ້ ມາເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນປີ 2022.

ໂດຍປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ(ແຕ່ປີ2021-2025) ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບກະຊວງປ້ອງກັນປະເທດ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດແຜນການເຄື່ອນໄຫວໃນການສ້າງຮ່າງກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ຕາມຂັ້ນຕອນຂອງການສ້າງນິຕິກຳ ດັ່ງນີ້:

1. ພາຍຫລັງທີ່ຄະນະຮັບຜິດຊອບໄດ້ຖືກແຕ່ງຕັ້ງ ກໍໄດ້ເລີ່ມຄົ້ນຄວ້າດ້ານເນື້ອໃນ ນັບແຕ່ວັນທີ 1 ຕຸລາ ຫາ 30 ພະຈິກ 2021 ຈົນສຳເລັດໂດຍພື້ນຖານ.

2. ໃນລະຫວ່າງວັນທີ 16-17 ທັນວາ 2021 ໄດ້ຈັດສົ່ງຮ່າງກົດໝາຍໄປທາບທາມກົມກອງອ້ອມຂ້າງກະຊວງ, ກອງບັນຊາການ ປກສ ນະຄອນຫລວງ ແລະ ປກສ ແຂວງ ທົ່ວປະເທດ; ໃນກອງປະຊຸມສະຫລຸບວຽກງານປ້ອງກັນຄວາມສະຫງົບທົ່ວປະເທດ ແລະ ພ້ອມທັງສົ່ງໃຫ້ຂະແໜງການກ່ຽວຂ້ອງອື່ນ ປະກອບຄຳເຫັນໃສ່ຮ່າງກົດໝາຍດັ່ງກ່າວ (ອີງຕາມຄຳແນະນຳຂອງກະຊວງຍຸຕິທຳ ສະບັບເລກທີ 1239/ກຍ, ລົງວັນທີ 13 ຕຸລາ 2021 ກ່ຽວກັບການສ້າງ ແລະ ປັບປຸງກົດໝາຍໃນໄລຍະການແຜ່ລະບາດພະຍາດໂຄວິດ-19).

3. ວັນທີ 25 ກຸມພາ 2022 ໄດ້ຈັດກອງປະຊຸມປຶກສາຫາລື ຄົ້ນຄວ້າປັບປຸງ ເພື່ອຄວາມເປັນເອກະພາບກັນ ລະຫວ່າງກະຊວງປ້ອງກັນຄວາມສະຫງົບແລະກະຊວງປ້ອງກັນປະເທດ.

4. ໃນລະຫວ່າງວັນທີ 3-17 ມີນາ 2022 (ໃຊ້ເວລາ 6 ວັນ) ໄດ້ຈັດກອງປະຊຸມຮ່ວມກັບກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງທາງດ້ານກົດໝາຍ.

5. ວັນທີ 21 ມີນາ 2022 ໄດ້ນຳຮ່າງກົດໝາຍ ເຂົ້າຜ່ານກອງປະຊຸມສາມັນປະຈຳເດືອນມີນາ ຂອງລັດຖະບານ.

6. ໃນລະຫວ່າງວັນທີ 31 ມີນາ ຫາ 1 ເມສາ 2022 ໄດ້ຈັດກອງປະຊຸມປັບປຸງຮ່າງກົດໝາຍ ຕາມຄຳເຫັນຂອງສະມາຊິກລັດຖະບານຮ່ວມກັບກະຊວງຍຸຕິທຳ ແລະ ຂະແໜງການທີ່ກ່ຽວຂ້ອງ.

7. ວັນທີ 25 ເມສາ 2022 ໄດ້ຜ່ານກອງປະຊຸມກວດກາເນື້ອໃນຮອບດ້ານຂັ້ນການນຳຮ່ວມກັບກຳມາທິການກົດໝາຍ, ກຳມາທິການ ປກຊ-ປກສ ສະພາແຫ່ງຊາດ ແລະ ຂະແໜງການທີ່ກ່ຽວຂ້ອງ.

8. ວັນທີ 28 ເມສາ 2022 ໄດ້ຜ່ານ ແລະ ປັບປຸງຕາມຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ.

9. ລ່າສຸດໃນເດືອນພຶດສະພາ 2022 ກຳມາທິການກົດໝາຍ ໄດ້ສົ່ງຮ່າງກົດໝາຍ ສະບັບດັ່ງກ່າວລົງທາບທາມຄຳເຫັນຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຂອບເຂດທົ່ວປະເທດ; ສັງລວມຄຳເຫັນຂອງສະມາຊິກສະພາແຫ່ງຊາດ ມີ 20 ມາດຕາ, ກວມ 61 ເນື້ອໃນ; ໄດ້ນຳເອົາຄຳເຫັນດັ່ງກ່າວມາຄົ້ນຄວ້າ ແລະ ເຫັນດີປັບປຸງຄຳເຫັນ ໃສ່ຮ່າງກົດໝາຍ ມີ 6 ມາດຕາ, ກວມ 6 ເນື້ອໃນ (ລາຍລະອຽດເຫດຜົນທີ່ບໍ່ໄດ້ປັບປຸງຕາມການສະເໜີ ມີເອກະສານຄັດຕິດມາພ້ອມນີ້).

ຜ່ານບັນດາຂັ້ນຕອນດັ່ງກ່າວ ຈຶ່ງເຮັດໃຫ້ຮ່າງກົດໝາຍສະບັບນີ້ ສຳເລັດໂດຍພື້ນຖານ ທາງດ້ານໂຄງຮ່າງ ແລະ ເນື້ອໃນ; ຖືວ່າມີຄວາມຄົບຖ້ວນ, ສົມບູນ ແລະ ຮັດກຸມ ພໍສົມຄວນ.

**III. ໂຄງປະກອບ ແລະ ເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.**

ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ສະບັບນີ້ ປະກອບດ້ວຍ IX ພາກ, 9 ໝວດ ແລະ 67 ມາດຕາ ລະອຽດດັ່ງນີ້:

- ພາກທີ I ບົດບັນຍັດທົ່ວໄປ (ມີ 7 ມາດຕາ; ແຕ່ມາດຕາ 1 ຫາ ມາດຕາ 7).
- ພາກທີ II ການຄຸ້ມຄອງອາວຸດ (ມີ 4 ໝວດ ແລະ 18 ມາດຕາ; ແຕ່ມາດຕາ 8 ຫາ ມາດຕາ 25).
  - ໝວດທີ 1 ປະເພດອາວຸດ (ມີ 4 ມາດຕາ; ແຕ່ມາດຕາ 8 ຫາ ມາດຕາ 11).
  - ໝວດທີ 2 ການຄຸ້ມຄອງອາວຸດເສິກ (ມີ 8 ມາດຕາ; ແຕ່ມາດຕາ 12 ຫາ ມາດຕາ 19).
  - ໝວດທີ 3 ການຄຸ້ມຄອງອາວຸດກິລາ (ມີ 4 ມາດຕາ; ແຕ່ມາດຕາ 20 ຫາ ມາດຕາ 23).
  - ໝວດທີ 4 ການຄຸ້ມຄອງອາວຸດພື້ນເມືອງ (ມີ 2 ມາດຕາ; ແຕ່ມາດຕາ 24 ຫາ ມາດຕາ25).
- ພາກທີ III ການຄຸ້ມຄອງວັດຖຸລະເບີດ (ມີ 3 ໝວດ ແລະ 15 ມາດຕາ; ແຕ່ມາດຕາ 26 ຫາ ມາດຕາ 40).
  - ໝວດທີ 1 ປະເພດວັດຖຸລະເບີດ (ມີ 3 ມາດຕາ; ແຕ່ມາດຕາ 26 ຫາ ມາດຕາ 28).
  - ໝວດທີ 2 ການຄຸ້ມຄອງວັດຖຸລະເບີດທາງການທະຫານ (ມີ 3 ມາດຕາ; ແຕ່ມາດຕາ 29 ຫາ ມາດຕາ 31).
  - ໝວດທີ 3 ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ (ມີ 9 ມາດຕາ; ແຕ່ມາດຕາ 32 ຫາມາດຕາ 40).
- ພາກທີ IV ການດຳເນີນທຸລະກິດ ກ່ຽວກັບອາວຸດ ແລະ ວັດຖຸລະເບີດ (ມີ 9 ມາດຕາ; ແຕ່ມາດຕາ 41 ຫາ ມາດຕາ 49).
- ພາກທີ V ຂໍ້ຫ້າມ (ມີ 4 ມາດຕາ; ແຕ່ມາດຕາ 50 ຫາ ມາດຕາ 53).
- ພາກທີ VI ການຄຸ້ມຄອງ ແລະ ການກວດກາ (ມີ 2 ໝວດ, 7 ມາດຕາ; ແຕ່ມາດຕາ 54 ຫາ ມາດຕາ 60).
  - ໝວດທີ 1 ອົງການຄຸ້ມຄອງວຽກງານອາວຸດ ແລະ ວັດຖຸລະເບີດ (ມີ 4 ມາດຕາ; ແຕ່ມາດຕາ 54 ຫາ ມາດຕາ 57).
  - ໝວດທີ 2 ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ (ມີ 3 ມາດຕາ ແຕ່ມາດຕາ 58 ຫາ ມາດຕາ 60).
- ພາກທີ VII ງົບປະມານ (ມີ 2 ມາດຕາ; ແຕ່ມາດຕາ 61 ຫາ ມາດຕາ 62).
- ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ (ມີ 3 ມາດຕາ; ແຕ່ມາດຕາ 63 ຫາ ມາດຕາ 65).
- ພາກທີ IX ບົດບັນຍັດສຸດທ້າຍ (ມີ 2 ມາດຕາ; ແຕ່ມາດຕາ 66 ຫາ ມາດຕາ 67).

**IV. ຄາດຄະເນຜົນໄດ້ຮັບຈາກການສ້າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.**

ເມື່ອກົດໝາຍສະບັບນີ້ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ຄາດຄະເນຜົນໄດ້ຮັບ ດັ່ງນີ້:

1. ເປັນພື້ນຖານອັນສຳຄັນທາງດ້ານກົດໝາຍ ໃນການຮັບປະກັນສະຖຽນລະພາບຄວາມໝັ້ນຄົງ,ຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

2. ເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ພະນັກງານຂະແໜງການທີ່ກ່ຽວຂ້ອງ ເຄື່ອນໄຫວປະຕິບັດໜ້າທີ່ວຽກງານການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ຮັບປະກັນໃຫ້ແກ່ການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ຂອງສັງຄົມຕາມທິດປົກຄອງດ້ວຍກົດໝາຍ.

3. ສາມາດແກ້ໄຂບັນຫາປາກົດການຫຍໍ້ທໍ້ໃນສັງຄົມ ທີ່ກ່ຽວຂ້ອງກັບບັນຫາດັ່ງກ່າວຢ່າງຂາດຕົວ.

4. ຈະເຮັດໃຫ້ບັນຫາການລັກລອບຊື້-ຂາຍ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ອາວຸດເຖື່ອນໃນສັງຄົມຫລຸດໜ້ອຍລົງ, ຍ້ອນມີມາດຕະການໃນການຈັດຕັ້ງປະຕິບັດທີ່ເຂັ້ມງວດ.

ເນື້ອໃນຮ່າງກົດໝາຍສະບັບນີ້ເຫັນວ່າ ມີຄວາມລະອຽດ, ຄົບຖ້ວນ, ຊັດເຈນພໍສົມຄວນ, ແຕ່ເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ທັງເປັນບ່ອນອີງໃຫ້ແກ່ກຳລັງປ້ອງກັນຊາດ-ກຳລັງປ້ອງກັນຄວາມສະຫງົບ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານວິຊາສະເພາະ ທັງເປັນການຮັກສາສະຖຽນລະພາບ, ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍທາງດ້ານເສດຖະກິດ-ສັງຄົມ.

## ຊົມເຊີຍ...

ເຊີແລນ ໃນປີ 2018 ໂດຍໄດ້ກຳນົດເອົາວັນທີ 30 ມິຖຸນາ ຂອງທຸກໆປີ ເປັນວັນສະເຫລີມສະຫລອງວັນລັດຖະສະພາສາກົນ ຂອງທຸກປະເທດສະມາຊິກໃນທົ່ວໂລກ.

ອົງການສະຫະພັນລັດຖະສະພາສາກົນ (IPU) ແມ່ນອົງການລະດັບໂລກຂອງລັດຖະສະພາຈາກປະເທດຕ່າງໆ ໂດຍມີຈຸດປະສົງ ເພື່ອສ້າງເປັນເວທີສົ່ງເສີມການຕິດຕໍ່ພົວພັນ, ການປະສານງານ ແລະ ການແລກປ່ຽນປະສົບການລະຫວ່າງລັດຖະສະພາ ແລະ ສະມາຊິກລັດຖະສະພາທຸກປະເທດໃນໂລກ; ພິຈາລະນາບັນຫາສຳຄັນຂອງໂລກ, ສົ່ງເສີມການປົກຄອງດ້ວຍລະບຽບກົດໝາຍ, ສົ່ງເສີມບົດບາດຍິງ-ຊາຍ ແລະ ສະມາຊິກລັດຖະສະພາໜຸ່ມ, ສົ່ງເສີມສັນຕິພາບ, ມິດຕະພາບ ປະຊາທິປະໄຕ ແລະ ການພັດທະນາແບບຍືນຍົງ.

ສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຂົ້າເປັນສະມາຊິກສະຫະພັນລັດຖະສະພາສາກົນໃນວັນທີ 4 ເມສາ 1990. ຈາກນັ້ນມາ, ສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕັ້ງໜ້າເຂົ້າຮ່ວມເຄື່ອນໄຫວຢ່າງຫ້າວຫັນ ໃນກອງປະຊຸມໃຫຍ່ ແລະ ກອງປະຊຸມລະດັບຕ່າງໆຂອງສະຫະພັນລັດຖະສະພາສາກົນ ເຊິ່ງເປັນການເຜີຍແຜ່ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ປະກອບສ່ວນອັນສຳຄັນເຂົ້າໃນການສົ່ງເສີມສັນຕິພາບ, ມິດຕະພາບສະຖຽນລະພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ແລະ ສາກົນ.

ທ້າຍນີ້, ຂ້າພະເຈົ້າ ຂໍອວຍພອນວັນລັດຖະສະພາສາກົນນີ້ ຈົ່ງເປັນວັນທີ່ມີຄວາມໝາຍຄວາມສຳຄັນ ແລະ ເປັນວັນແຫ່ງການຊຸກຍູ້ສົ່ງເສີມບົດບາດຂອງລັດຖະສະພາໃນທົ່ວໂລກ ໂດຍສະເພາະສະພາແຫ່ງຊາດ ແຫ່ງ ສປປລາວ ໃຫ້ມີຄວາມເຂັ້ມແຂງ ແລະ ສົມກັບເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ. ອວຍພອນແດ່ບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກໃນຄອບຄົວ ແລະ ຊີວິດສ່ວນຕົວ ແລະ ປະສົບຜົນສຳເລັດໃນໜ້າທີ່ອັນມີກຽດສູງສົ່ງຂອງບັນດາທ່ານ.

## ສສຊ...

ແລະ ກາງ ທີ່ສະເໜີໂດຍທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ; ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ສະເໜີໂດຍທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ ທີ່ສະເໜີໂດຍທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ; ພ້ອມນັ້ນ, ອະນຸກຳມະການຮັບຜິດຊອບຮ່າງກົດໝາຍສະບັບປັບປຸງທັງ 3 ສະບັບດັ່ງກ່າວ ໄດ້ຊີ້ແຈງຕໍ່ທີ່ປະຊຸມ ແລະ ໃຫ້ຄວາມກະຈ່າງແຈ້ງຕາມການເຈາະຈີ້ມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ພິເສດ: ໃນວາລະກອງປະຊຸມຕອນເຊົ້າຂອງວັນທີ 30 ມິຖຸນາ 2022, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໃນນາມປະທານຄະນະສະຫະພັນລັດຖະສະພາສາກົນ (IPU) ຂອງສະພາແຫ່ງຊາດ ແຫ່ງ ສປປລາວ ຍັງໄດ້ມີຄຳເຫັນກ່າວຊົມເຊີຍເນື່ອງໃນໂອກາດວັນສ້າງຕັ້ງລັດຖະສະພາສາກົນ (IPU) ຄົບຮອບ 133 ປີ (30/6/1889-30/6/2022).

(ນາງ ປາກາລັກ ພົມມີໄຊ)

## ລາຍງານ...

- ຄະນະພັກ-ອົງການປົກຄອງຂັ້ນຕ່າງໆ ໄດ້ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນໃນການນຳພາຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ປະຊາຊົນບັນດາເຜົ່າໄດ້ຍົກສູງສະຕິເຄົາລົບກົດໝາຍ ແລະ ຮັບຮູ້ໄດ້ເຖິງຜົນຮ້າຍຂອງຢາເສບຕິດ, ປະກອບສ່ວນເຂົ້າຮ່ວມໃນການແຈ້ງຂໍ້ມູນຫລັກຖານ ແລະ ແຫລ່ງຂ່າວກ່ຽວກັບບັນຫາຢາເສບຕິດ; ອົງການສືບສວນ-ສອບສວນໄດ້ເປັນເຈົ້າການເຄື່ອນໄຫວຕາມທິດນຳ ແລະ ຫລັກການທີ່ໄດ້ກຳນົດໄວ້ໃນຄຳສັ່ງເລກທີ 02 ຂອງກົມການເມືອງສູນກາງພັກ.

- ການໂຄສະນາເຜີຍແຜ່ວາລະແຫ່ງຊາດ ໄດ້ເຂົ້າເຖິງທຸກຊັ້ນຄົນໃນສັງຄົມ, ເຮັດໃຫ້ທົ່ວສັງຄົມໄດ້ຮັບຮູ້ເຂົ້າໃຈ ແລະ ເຫັນໄດ້ຄວາມຕັດສິນໃຈເດັດຂາດຂອງພັກ-ລັດຖະບານ ພ້ອມທັງເຫັນໄດ້ຜົນຮ້າຍຄວາມເປັນອັນຕະລາຍຂອງຢາເສບຕິດ.

- ເຈົ້າໜ້າທີ່ຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະ ເຈົ້າໜ້າທີ່ອົງການສືບສວນ-ສອບສວນ ໄດ້ຍົກສູງຄວາມຮັບຜິດຊອບຂຶ້ນຕື່ມບາດກ້າວໜຶ່ງ ເປັນຕົ້ນແມ່ນຄວາມຮັບຜິດຊອບປະຕິບັດ ຕາມ 3 ຫລັກການພື້ນຖານທີ່ກຳນົດໄວ້ໃນວາລະແຫ່ງຊາດ.

- ກຸ່ມຄ້າຂາຍ, ຂົນສົ່ງ ແລະ ເສບຢາເສບຕິດ ມີຄວາມຢ້ານກົວ, ຈຳນວນໜຶ່ງກໍຢຸດເຊົາ, ປະຖິ້ມວັດຖຸຂອງກາງທີ່ກ່ຽວພັນເຖິງຢາເສບຕິດ,

- ການຈັດຕັ້ງປະຕິບັດໃນໄລຍະທີ 1 ພວກເຮົາສາມາດແກ້ໄຂໄດ້ຫລາຍຄະດີ ເຊິ່ງເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການແກ້ໄຂສະພາບຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ, ປະກອບສ່ວນເຂົ້າໃນການສ້າງສະພາບແວດລ້ອມ, ເງື່ອນໄຂເອື້ອອຳນວຍໃຫ້ແກ່ການສ້າງສາພັດທະນາເສດຖະກິດ-ສັງຄົມ.

**ຂ. ດ້ານອ່ອນຄົງຄ້າງ ແລະ ບັນຫາທີ່ພົບຄວາມຫຍຸ້ງຍາກ.**

1. ຄວາມເປັນເຈົ້າການຄະນະພັກ-ຄະນະນຳຂອງບາງຂະແໜງການ ໃນການລົງໂຄສະນາເຜີຍແຜ່ວາລະແຫ່ງຊາດ ແລະ ຜົນຮ້າຍຂອງຢາເສບຕິດຍັງຊັກຊ້າ, ບໍ່ທົ່ວເຖິງ; ຄະນະອານຸກຳມະການ, ຄະນະປະສານງານຂອງບາງຂະແໜງການ ຍັງບໍ່ເປັນເຈົ້າການຍົກສູງຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດ; ບາງຂະແໜງການ ຍັງບໍ່ທັນໄດ້ແຕ່ງຕັ້ງຄະນະປະສານງານ ຫລື ມີຄະນະປະສານງານແລ້ວ ແຕ່ບໍ່ທັນໄດ້ເຄື່ອນໄຫວຢ່າງມີປະສິດທິຜົນ; ຍັງບໍ່ມີການສະຫລຸບຕີລາຄາ ເພື່ອລາຍງານຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະສົ່ງໃຫ້ກະຊວງປ້ອງກັນຄວາມສະຫງົບ ເພື່ອສະຫລຸບສັງລວມລາຍງານລັດຖະບານ.

2. ເຖິງວ່າກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນຈຳນວນໜຶ່ງແລ້ວກໍຕາມ, ແຕ່ຄວາມຮັບຮູ້, ຄວາມເຂົ້າໃຈ, ຄວາມສາມາດຂອງພະນັກງານຈຳນວນໜຶ່ງຍັງຈຳກັດ ເປັນຕົ້ນແມ່ນຂົງເຂດການດຳເນີນຄະດີຢາເສບຕິດເວົ້າລວມ, ເວົ້າສະເພາະແມ່ນເຈົ້າໜ້າທີ່ອົງການສືບສວນ-ສອບສວນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ເຮັດວຽກງານຍັງບໍ່ມີປະສິດທິຜົນ.

3. ກົດໝາຍ, ນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ ຍັງບໍ່ທັນໄດ້ປັບປຸງໃຫ້ສອດຄ່ອງ ຫລື ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ກໍຄືສະພາບຄວາມເປັນຈິງ ໃນການແກ້ໄຂບັນຫາຢາເສບຕິດໃນປັດຈຸບັນເປັນຕົ້ນແມ່ນການສ້າງບັນດານິຕິກຳ ເພື່ອຈັດຕັ້ງປະຕິບັດໂທດປະຫານຊີວິດຍັງບໍ່ທັນສ້າງສຳເລັດ; ການເຜີຍແຜ່ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ.

4. ການຕອບສະໜອງ ດ້ານບຸກຄະລາກອນ, ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະ ທີ່ຈຳເປັນເພື່ອມາຮັບໃຊ້ໃຫ້ແກ່ວາລະແຫ່ງຊາດຍັງບໍ່ທັນມີ, ການສະເໜີຂໍງົບປະມານ ເຫັນວ່າມີຫລາຍຂັ້ນຕອນ, ມີຄວາມຊັກຊ້າ, ເຮັດໃຫ້ແຜນການເຄື່ອນໄຫວບໍ່ສາມາດດຳເນີນໄປຕາມແຜນການທີ່ວາງໄວ້.

5. ສະພາບການຂອງໂລກ, ພາກພື້ນ ມີການຜັນແປໄປຢ່າງສັບສົນ ເປັນຕົ້ນແມ່ນການແຜ່ລະບາດຂອງພະຍາດໂຄວິດ-19, ຜົນກະທົບທາງດ້ານເສດຖະກິດ, ຄ່າເງິນເຟີ້, ເຮັດໃຫ້ຄ່າຄອງຊີບສູງ ເຊິ່ງສ້າງຜົນກະທົບບໍ່ໜ້ອຍຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ.

**II. ທິດທາງແຜນການວຽກງານຈຸດສຸມ.**

ສືບຕໍ່ຈັດຕັ້ງປະຕິບັດຕາມແຜນວຽກ ໄລຍະທີ 2, ຕາມ 6 ວຽກຈຸດສຸມ ທີ່ໄດ້ກຳນົດໄວ້ຄື:

**1. ວຽກງານສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ**

- ອົງການສື່ມວນຊົນຂອງລັດ, ເອກະຊົນ ຕ້ອງຍົກສູງຄວາມຮັບຜິດຊອບ ໃນການເຄື່ອນໄຫວໂຄສະນາ-ສຶກສາອົບຮົມທາງເລິກ ແລະ ທາງກ້ວາງ ຕໍ່ຜົນຮ້າຍຂອງຢາເສບຕິດ; ຈັດພິມປຶ້ມກົດໝາຍ ສະບັບປັບປຸງ, ເອກະສານກ່ຽວກັບວາລະແຫ່ງຊາດ, ປຶ້ມຄູ່ມືໂຄສະນາ, ປ້າຍຄຳຂວັນ, ຮູບພາບປ້າຍໂຄສະນາ, ປຶ້ມສັງລວມບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວາລະແຫ່ງຊາດເພື່ອເປັນບ່ອນອີງໃຫ້ສຳນັກງານອົງການ, ຂະແໜງການຕ່າງໆ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຄົ້ນຄ້ວາຈັດຕັ້ງປະຕິບັດ.

- ສືບຕໍ່ເຜີຍແຜ່ບັນດາເອກະສານວາລະແຫ່ງຊາດຢູ່ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ຕາມຂະແໜງສາຍຕັ້ງຢູ່ທ້ອງຖິ່ນ, ສຳລັບອົງການປົກຄອງແຕ່ລະຂັ້ນຕ້ອງໄດ້ສືບຕໍ່ຜັນຂະຫຍາຍລົງສູ່ຂັ້ນຮາກຖານ ໂດຍເລັ່ງໃສ່ເປົ້າໝາຍກຸ່ມສ່ຽງ ເປັນຕົ້ນ: ກຸ່ມໃຊ້ແຮງງານ ແລະ ຜູ້ອອກແຮງງານ, ນັກຮຽນ-ນັກສຶກສາ, ຖັນແຖວໄວໜຸ່ມຕະຫລອດຮອດປະຊາຊົນບັນດາເຜົ່າໃນເຂດຫ່າງໄກສອກຫລີກ ທີ່ຊີວິດການເປັນຢູ່ພົບຄວາມຫຍຸ້ງຍາກ;ພ້ອມນັ້ນ, ຕ້ອງລະດົມ ແລະ ນຳໃຊ້ກຳລັງແຮງໃນທົ່ວສັງຄົມ ເຂົ້າຮ່ວມໃນການໂຄສະນາສຶກສາອົບຮົມ ເປັນຕົ້ນແມ່ນອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການພຸດທະສາສະໜາສຳພັນລາວຂັ້ນຕ່າງໆ ແລະ ອົງການຈັດຕັ້ງສັງຄົມອື່ນໆ.

- ຄົ້ນຄວ້າສ້າງຫລັກສູດຕຳລາການຮຽນ-ການສອນ ກ່ຽວກັບວິທີປ້ອງກັນຢາເສບຕິດຊັ້ນມັດທະຍົມຕອນຕົ້ນ, ຕອນປາຍ, ຈັດຕັ້ງລົງໂຄສະນາຢູ່ບັນດາບ້ານລຽບຕາມຊາຍແດນຢູ່ຊັ້ນປະຖົມ, ຈັດເຝິກອົບຮົມວຽກງານສ້າງນັກໂຄສະນາໃຫ້ໄດ້ແຂວງລະ 3 ຄົນ ແລະ ທີ່ໄດ້ກຳນົດໄວ້.

- ສ້າງຂະບວນການສະເຫລີມສະຫລອງວັນສາກົນ ແລະ ວັນແຫ່ງຊາດຕ້ານຢາເສບຕິດ ດ້ວຍຫລາຍຮູບການເຊັ່ນ: ຈັດພິທີຈູດທຳລາຍຢາເສບຕິດ, ຈັດງານໂຮມຊຸມນຸມມິດຕິງ, ກິດຈະກຳແຂ່ງຂັນສິນລະປະວັນນະຄະດີ, ກິລາກາຍຍະກຳຕ້ານຢາເສບຕິດ ແລະ ປຸກລະດົມຂົນຂວາຍລະດົມທຶນຈາກທົ່ວສັງຄົມ.

**2. ວຽກງານສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ.**

- ຈັດຕັ້ງລົງໂຄສະນາເຜີຍແຜ່ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດທີ່ສະພາແຫ່ງຊາດໄດ້ຮັບຮອງ ແລະ ປະທານປະເທດໄດ້ອອກລັດຖະດຳລັດສະບັບເລກທີ227/ປປທ. ລົງວັນທີ 06 ທັນວາ 2021 ປະກາດໃຊ້ຢ່າງເປັນທາງການ ທັງສືບຕໍ່ຄົ້ນຄ້ວາສ້າງ, ປັບປຸງບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວຂ້ອງກັບບັນຫາຢາເສບຕິດ ເປັນຕົ້ນແມ່ນປັບປຸງດຳລັດຂອງນາຍົກລັດຖະມົນຕີກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 076/ນຍ, ລົງວັນທີ 20 ມີນາ 2009 ໂດຍເພີ່ມສານເຄມີຄວບຄຸມຊະນິດໃໝ່ເຂົ້າຕື່ມ, ປັບປຸງຄຳສັ່ງວ່າດ້ວຍການຂຶ້ນບັນຊີເຕົ້າໂຮມຊັບສິນທີ່ສານຕັດສິນຮິບເປັນຂອງລັດ ສະບັບເລກທີ 07 ຂຶ້ນເປັນດຳລັດ ຂອງນາຍົກລັດຖະມົນຕີ; ປັບປຸງຄຳສັ່ງ ສະບັບເລກທີ 36/ນຍ ວ່າດ້ວຍການເພີ່ມທະວີການແກ້ໄຂບັນຫາຢາເສບຕິດ ແລະ ການປູກຝິ່ນ-ປູກຄັນຊາ ໃຫ້ເປັນດຳລັດຂອງນາຍົກລັດຖະມົນຕີ.

- ເປັນເຈົ້າການປະສານສົມທົບລະຫວ່າງ ກະຊວງ-ອົງການຂັ້ນສູນກາງ ກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຈັດຕັ້ງປະຕິບັດຕາມດຳລັດ ສະບັບເລກທີ 267/ລບ, ລົງວັນທີ 05 ສິງຫາ 2014 ກ່ຽວກັບກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໂດຍແບ່ງເງິນທີ່ໄດ້ຈາກການປະມູນຂາຍຊັບສິນຄະດີຢາເສບຕິດຕາມອັດຕາສ່ວນ70/30 ໂອນເຂົ້າກອງທຶນດັ່ງກ່າວ ເພື່ອໃຫ້ມີງົບປະມານຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ.

- ເພື່ອຈັດຕັ້ງປະຕິບັດໂທດປະຫານຊີວິດ ໃຫ້ເປັນຮູບປະທຳ ທັງແນໃສ່ເຮັດໃຫ້ພວກເປົ້າໝາຍ ເປັນຕົ້ນແມ່ນ ຜູ້ເປັນຫົວໂປ້ຕົວການຄ້າຂາຍຢາເສບຕິດ ມີຄວາມຢ້ານກົວຕໍ່ລະບຽບກົດໝາຍ, ມີຄວາມຈຳເປັນຕ້ອງໄດ້ຄົ້ນຄວ້ານິຕິກຳທີ່ກ່ຽວຂ້ອງໃຫ້ສຳເລັດໂດຍໄວ; ໂດຍສະເພາະແມ່ນດຳລັດວ່າດ້ວຍວຽກງານຄຸມຂັງດັດສ້າງ, ປັບປຸງຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03 ລົງວັນທີ 17/07/2003 ກ່ຽວກັບວິທີປະຕິບັດຄຳຕັດສິນປະຫານຊີວິດ ແລະ ປັບປຸງຄຳແນະນຳຮ່ວມ ຂອງປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ແລະ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບວິທີປະຕິບັດໂທດປະຫານຊີວິດ.

- ສ້າງແຜນການເຄື່ອນໄຫວໃຫ້ການນຳຂອງລັດຖະບານ ໂດຍສະເພາະທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ຄະນະນຳກະຊວງລົງຊຸກຍູ້ຕິດຕາມ, ກວດກາ ແລະ ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ພາກສ່ວນກ່ຽວຂ້ອງເພີ່ມທະວີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວາລະແຫ່ງຊາດໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້.

**3. ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ, ອົງການປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕໍ່ການແກ້ໄຂບັນຫາຢາເສບຕິດ.**

- ປັບປຸງ ພາລະບົດບາດ, ສິດ, ໜ້າທີ່, ບຸກຄະລາກອນ, ອຸປະກອນເຕັກນິກ, ພາຫະນະ, ນິຕິກຳທີ່ກ່ຽວຂ້ອງ ແລະ ກໍ່ສ້າງໂຄງລ່າງຮັບໃຊ້ເຂົ້າໃນວຽກງານການແກ້ໄຂບັນຫາຢາເສບຕິດ: ໃນນີ້, ສຸມໃສ່ປັບປຸງລະບົບກົງຈັກການຈັດຕັ້ງຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫລວດແຕ່ລະຂັ້ນ ເພື່ອເຮັດໜ້າທີ່ໃນການແກ້ໄຂບັນຫາຢາເສບຕິດ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ໂດຍເລັ່ງໃສ່ປັບປຸງກຳລັງ ປກສ ກຸ່ມບ້ານ, ປກສ ບ້ານ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນທາງດ້ານກຳລັງພົນ ແລະ ອຸປະກອນຮັບໃຊ້ວິຊາສະເພາະ.

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຄະດີຢາເສບຕິດ ຕາມຂະບວນຍຸຕິທຳ.

**4. ວຽກງານຍົກສູງປະສິດທິພາບ ດ້ານການຄຸ້ມຄອງ, ຊີ້ນຳ ໃນການຈັດຕັ້ງປະຕິບັດຮອບດ້ານໃນວຽກງານແກ້ໄຂບັນຫາຢາເສບຕິດ.**

- ຈັດຕັ້ງເຝິກອົບຮົມເຕັກນິກການວິເຄາະວິໄຈ, ຈັດຊື້ອຸປະກອນຮັບໃຊ້ຫ້ອງວິໄຈຢາເສບຕິດ; ວຽກງານກວດກາຄວບຄຸມຢາເສບຕິດ, ວຽກງານສະກັດກັ້ນຕ້ານຢາເສບຕິດ, ວຽກງານສືບສວນຂັ້ນພື້ນຖານ, ວຽກງານຊົນນະສູດ, ສືບຄົ້ນຫາເປົ້າໝາຍ, ວຽກງານສູນບຳບັດປິ່ນປົວ, ໃຫ້ຄຳປຶກສາ, ເຝິກວິຊາຊີບ ແລະ ຜະລິດຢາປິ່ນປົວຜູ້ຕິດຢາເສບຕິດ.

- ສືບຕໍ່ກວດກາ, ຄວບຄຸມການລັກລອບນຳເຂົ້າ, ການຄຸ້ມຄອງການນຳໃຊ້ສານເຄມີຕົ້ນ; ສຳຫລວດ, ກຳນົດຈຸດພື້ນທີ່ເປົ້າໝາຍລັກລອບປູກຝິ່ນ-ປູກກັນຊາ, ພືດທີ່ໃຫ້ສານເສບຕິດ; ກຳນົດພື້ນທີ່ ແລະ ຈຸດອັດປ່ອງຂ້າມລອຍ, ເສັ້ນທາງຂົນສົ່ງຢາເສບຕິດ ໃນຂອບເຂດທົ່ວປະເທດ, ໂດຍສະເພາະແມ່ນຊາຍແດນລະຫວ່າງປະເທດ, ລະຫວ່າງແຂວງຕໍ່ແຂວງ; ຈັດຕັ້ງໜ່ວຍສະເພາະກິດໃນການກວດກາ-ສະກັດກັ້ນຕາມພື້ນທີ່ຫລໍ່ແຫລມ ໂດຍນຳໃຊ້ກຳລັງຂອງກະຊວງ, ແຂວງ ແລະ ກຳລັງທະຫານຊາຍແດນ ດ້ວຍການຈັດຕັ້ງຈຸດດ່ານກວດກາຖາວອນ, ເຄື່ອນທີ່ໃນກໍລະນີມີຂໍ້ມູນ ແລະ ກຳນົດຟື້ນທີ່ເສັ້ນທາງການເຝົ້າລະວັງການລັກລອບລຳລຽງ-ຂົນສົ່ງຢາເສບຕິດ.

- ສືບຕໍ່ວຽກງານດຳເນີນຄະດີໃຫ້ເປັນໄປຕາມຂະບວນຍຸຕິທຳ ເປັນຕົ້ນການສືບສວນ-ສອບສວນປະກອບສຳນວນຄະດີ, ການຄົ້ນຄວ້າພິຈາລະນາສັ່ງຟ້ອງຜູ້ຖືກຫາ ແລະ ການພິຈາລະນາຕັດສິນຄະດີຢາເສບຕິດ ໃຫ້ມີຄວາມເດັດຂາດ, ໂປ່ງໃສ ຕາມກົດໝາຍວ່າດ້ວຍຢາເສບຕິດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**5.ວຽກງານປັບປຸງຂີດຄວາມສາມາດ ການເຄື່ອນໄຫວເຮັດໜ້າທີ່ຂອງລະບົບການເມືອງແຕ່ລະຂັ້ນ ເພື່ອຊີ້ນຳ-ນຳພາການແກ້ໄຂບັນຫາຢາເສບຕິດ ທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.**

- ສືບຕໍ່ຊີ້ນຳບັນດາແຂວງໃນທົ່ວປະເທດ ເຊິ່ງອາດຈະແບ່ງເປັນພາກເໜືອ, ພາກກາງ, ພາກໃຕ້ ເພື່ອຕິດຕາມ, ກວດກາ, ຊີ້ນຳໃຫ້ບັນດາແຂວງດັ່ງກ່າວເຄື່ອນໄຫວວຽກງານວິຊາສະເພາະໃຫ້ແຂງແຮງ ແລະ ຕໍ່ເນື່ອງ; ໂດຍສະເພາະແມ່ນບັນດາກອງບັນຊາການ ປກສ ແຂວງທີ່ຫລໍ່ແຫລມ, ພື້ນທີ່ສ່ຽງທີ່ຈະເປັນແຫລ່ງຜະລິດ,ຂົນສົ່ງຢາເສບຕິດ, ເຂດຊາຍແດນລະຫວ່າງປະເທດ, ລະຫວ່າງແຂວງຕໍ່ແຂວງ, ເມືອງຕໍ່ເມືອງ.

- ສືບຕໍ່ປັບປຸງວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຮອບດ້ານ ຕາມທິດສາມສ້າງໃຫ້ມີຄຸນນະພາບ, ຍູ້ແຮງຂະບວນການສ້າງບ້ານປ້ອງກັນຄວາມສະຫງົບດີ, ກຸ່ມບ້ານສູ້ຮົບຕິດລ່ຽນໃຫ້ເພີ່ມຂຶ້ນທາງດ້ານຈຳນວນ ແລະ ຄຸນນະພາບດ້ວຍການຍົກລະດັບຄວາມສາມາດໃນການນຳພາ-ຊີ້ນຳ, ການສ້າງແຜນການ, ການກວດກາປະເມີນຜົນ, ການເຝິກອົບຮົມໃຫ້ແກ່ລະບົບການເມືອງຢູ່ຂັ້ນຮາກຖານ.

- ແຕ່ລະພາກສ່ວນກ່ຽວຂ້ອງຕ້ອງໄດ້ສ້າງກົນໄກການປະສານງານ, ແຕ່ງຕັ້ງຄະນະຮັບຊອບແຕ່ລະວຽກຈຸດສຸມ ແລະ ກອງເລຂາຢູ່ໃນຂະແໜງການຕົນ ເພື່ອສ້າງແຜນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ແທດເໝາະກັບສະພາບການຕົວຈິງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ພ້ອມທັງຈັດຕັ້ງສະຫລຸບລາຍງານມາຍັງກະຊວງປ້ອງກັນຄວາມສະຫງົບ ຮັບຊາບເປັນແຕ່ລະໄລຍະ.

**6. ວຽກງານເພີ່ມທະວີການຮ່ວມມືສາກົນ.**

- ກະກຽມເຂົ້າຮ່ວມກອງປະຊຸມສອງຝ່າຍ, ສາມຝ່າຍລາວ-ຫວຽດນາມ-ກຳປູເຈຍ ລະດັບລັດຖະມົນຕີວ່າດ້ວຍການຮ່ວມມືເພື່ອຄວບຄຸມຢາເສບຕິດ ຄັ້ງທີ 20 ທີ່ປະເທດກຳປູເຈຍ, ກອງປະຊຸມລະດັບເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍບັນຫາຢາເສບຕິດ ຄັ້ງທີ 43; ກອງປະຊຸມ, ສຳມະນາ ແລະ ເຝິກອົບຮົມທີ່ສຳຄັນອື່ນໆ; ຕາມແຜນການຄາດກະຈະມີ 14 ຄັ້ງ.

- ກະກຽມເປີດຫ້ອງການປະສານງານຄວບຄຸມຢາເສບຕິດຕາມຊາຍແດນ (BLO) ທີ່ໄດ້ຮັບການສະໜັບໜູນຈາກອົງການສະຫະປະຊາຊາດເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາດຊະຍາກຳ (UNODC) ເລີ່ມອີກ 2 ແຫ່ງຄື: ດ່ານຂົວມິດຕະພາບລາວ-ໄທ ແຫ່ງທີ 3 ແຂວງຄຳມ່ວນ ແລະ ດ່ານປາກຕະພານ ແຂວງສາລະວັນ.

- ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ສສ.ຫວຽດນາມ ເພື່ອສ້າງ ແລະ ນຳໃຊ້ຫ້ອງການປະສານງານລຽບຕາມຊາຍແດນ ຈຳນວນ 242 ຫລັງ ທີ່ໄດ້ສຳຫລວດໄປແລ້ວໃຫ້ມີປະໂຫຍດສູງສຸດ.



## ຄວາມເຫັນແກ່ໂຕເກີດມາຈາກໃສ?

ໂດຍ: ດັ້ນກົບເມກ

ຜູ້ຂຽນຄຶງບໍ່ຕ້ອງຄິດຫາຄຳຕອບຍາກວ່າຄວາມເຫັນແກ່ໂຕເກີດມາຈາກໃສ ເພາະໂດຍທຳມະຊາດຂອງມະນຸດຍ່ອມເຫັນແກ່ໂຕເປັນຕົ້ນທຶນ ແຕ່ສິ່ງທີ່ມາກະຕຸ້ນຢ່າງແຮງປຽບດັ່ງຢາເຂັມໃຫຍ່ສັກເຂົ້າໃສ່ເສັ້ນເລືອດ ແລະ ໝາກຫົວໃຈ, ຫົວສະໝອງໃຫ້ຄົນເຫັນແກ່ໂຕຫລາຍເທົ່າທະວີຄູນນັ້ນຄື: ການແຂ່ງຂັນກັນພັດທະນາເສດຖະກິດ-ການແຂ່ງຂັນກັນທາງທຸລະກິດ ເພື່ອສ້າງທຶນ ແລະ ສະສົມໃຫ້ຫລາຍກວ່າໝູ່ ຕົ້ນຄວາມຄິດແບບນີ້ຈຶ່ງຍູ້ໃຫ້ຄົນຫາຍໃຈເຂົ້າ-ອອກເຫັນແກ່ໂຕ.

ການແຂ່ງຂັນກັນພັດທະນາເປັນສິ່ງທີ່ດີ ຖ້າວ່າຂະບວນການພັດທະນາຢູ່ໃນຫລັກການຍືນຍົງ-ສົມດຸນ ແລະ ບໍ່ທຳລາຍສິ່ງແວດລ້ອມ ຕະຫລອດເຖິງການບໍ່ທຳລາຍສິນລະປະວັດທະນະທຳພຽງເພາະເຫັນແກ່ລາຍໄດ້ເຂົ້າເຖິງກ້ອນໃຫຍ່, ຜູ້ຂຽນຂໍຍົກຕົວຢ່າງບາງປະເທດໃນໂລກທີ່ສ້າງນະໂຍບາຍພັດທະນາ ເພື່ອກໍ່ໃຫ້ເກີດລາຍໄດ້ເຂົ້າເຖິງແກ່ກຸ່ມຜົນປະໂຫຍດຂອງບຸກຄົນພຽງກຳມືໜຶ່ງ ແຕ່ຍັງມີຄົນສ່ວນໃຫຍ່ທີ່ບໍ່ໄດ້ປະໂຫຍດ ເຖິງແມ່ນວ່ານະໂຍບາຍບາງປະການ ເຊິ່ງເບິ່ງຄືວ່າມັນຈະສ້າງປະໂຫຍດໃຫ້ແກ່ສັງຄົມໜ້ອຍໜຶ່ງ ແຕ່ຍັງມີປະໂຫຍດເກີດແກ່ບາງກຸ່ມຄົນເທົ່ານັ້ນ.

ຖ້າວ່າເຮົາທວນຄິດທົບທວນຕັ້ງຄຳຖາມວ່າຄວາມເຫັນແກ່ໂຕໃນທຳນອງທີ່ວ່າໃຜມີຍາວສາວໄດ້ສາວເອົາ ມັນຈຶ່ງເຮັດໃຫ້ຜູ້ມີສັ້ນບໍ່ໄດ້ນຳເຂົາຈັກເທື່ອ ຖ້າເສດຖະກິດແບບແຂ່ງຂັນເຫັນພຽງແຕ່ກຳໄລ, ເງິນກ້ອນໃຫຍ່ເຂົ້າເຖິງ ແຕ່ສ່ວນລວມບໍ່ໄດ້ຮັບກໍຖືວ່າລາຍໄດ້ເກີດແກ່ບາງກຸ່ມຄົນແຕ່ບໍ່ເກີດແກ່ສ່ວນລວມ.

ຄວາມເຫັນແກ່ໂຕ ຖ້າວ່າຖືກກະຕຸ້ນດ້ວຍເສດຖະກິດແຂ່ງຂັນ, ແຂ່ງຂັນອອດກັນດ້ວຍຊັບກໍເປັນພຽງຄ່ານິຍົມທີ່ຜົນພວງມາຈາກເສດຖະກິດທຶນນິຍົມ ເຖິງແມ່ນວ່າປາກເຮົາບໍ່ຢາກເວົ້າເຖິງແຕ່ໃຈເຮົາເຕັມໄປດ້ວຍຕົວເລກລາຍໄດ້ເຂົ້າເຖິງ ກໍຍິ່ງເຮັດໃຫ້ຄົນເຫັນແກ່ໂຕ.

ຕໍ່ຈາກໜ້າ...

ບັດ-ປິ່ນປົວຜູ້ຕິດຢາເສບຕິດ ດ້ວຍການສົມທົບແໜ້ນ ລະຫວ່າງການບຳບັດ, ປິ່ນປົວ, ຟື້ນຟູສຸຂະພາບ ຂອງຜູ້ຕິດຢາເສບຕິດ ກັບການດັດສ້າງ ແລະ ເຝິກສີມື, ເຝິກອາຊີບໃຫ້ເຂົາເຈົ້າ, ເຊິ່ງໃນປັດຈຸບັນ ກໍຄືໃນຊຸມປີຕໍ່ໜ້າ ເຫັນວ່າຍັງມີຄວາມຈຳເປັນ ຕ້ອງໄດ້ປັບປຸງບັນດາສູນ ກໍຄືສະຖານທີ່ບຳບັດ-ປິ່ນປົວ ແລະ ເຝິກວິຊາຊີບ ເພື່ອຮັບໃຊ້ໃຫ້ແກ່ວຽກງານດັ່ງກ່າວ, ຄົ້ນຄວ້າປະກອບພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນ ແລະ ບຸກຄະລາກອນແພດໝໍ ກໍຄືວິຊາການດ້ານຕ່າງໆ ໃຫ້ມີຄວາມຮັບປະກັນຢ່າງເໝາະສົມ. ສ່ວນຄາດໝາຍຕໍ່ໄປແມ່ນຕ້ອງໄດ້ພະຍາຍາມເຮັດໃຫ້ຜູ້ຕິດຢາເສບຕິດຫລຸດລົງເປັນກ້າວໆ ເຊິ່ງນັ້ນແມ່ນຕົວຊີ້ວັດໜຶ່ງທີ່ຊີ້ໃຫ້ເຫັນປະສິດທິຜົນ ໃນການແກ້ໄຂບັນຫາຢາເສບຕິດ ຢູ່ປະເທດເຮົາ;

6. ໃຫ້ເອົາໃຈໃສ່ແກ້ໄຂປາກົດການຫຍໍ້ທໍ້ ແລະ ຄວາມບໍ່ໂປ່ງໃສໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຢ່າງເດັດຂາດ ແລະ ທັນການ, ຕ້ອງກຳນົດລະບອບລະບຽບການ, ກົນໄກ ແລະ ການຈັດຕັ້ງທີ່ເຂັ້ມແຂງ ກ່ຽວກັບບັນຫາທີ່ພົວພັນເຖິງການແຈ້ງຂໍ້ມູນຂອງກາງ, ຊັບສິນ, ການອາຍັດຊັບ, ການຍຶດຊັບ, ການຮິບວັດຖຸ ຈາກຜູ້ກະທຳຜິດຢາເສບຕິດທີ່ອາດເປັນຊ່ອງຫວ່າງພາໃຫ້ເກີດປາກົດຫຍໍ້ທໍ້, ພ້ອມທັງເອົາໃຈໃສ່ການແກ້ໄຂກໍລະນີຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ຫລັກສິນທຳ ໃນການດຳເນີນຄະດີຢາເສບຕິດ;

7. ໃຫ້ສືບຕໍ່ປັບປຸງລະບອບ, ກົນໄກການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນກໍຄືການປະສານງານ ລະຫວ່າງກະຊວງ, ອົງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງສູນກາງກັບທ້ອງຖິ່ນ ໃຫ້ມີຄວາມກົມກຽວ, ຄ່ອງຕົວ ແລະ ມີລະບອບບັນຊາ ຄືກັນກັບສະໜາມຮົບ ໂດຍພາຍໃຕ້ການບັນຊາໂດຍກົງ ຂອງທ່ານນາຍົກລັດຖະມົນຕີ, ທ່ານລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ກໍຄືບັນດາທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫລວງ, ເຈົ້າເມືອງ, ເຈົ້ານະຄອນ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ, ເມືອງ ຕະຫລອດເຖິງທຸກການຈັດຕັ້ງຢູ່ຂັ້ນຮາກຖານ ແລະ ໃນສັງຄົມ;

8. ໃຫ້ເພີ່ມທະວີຄວາມເຂັ້ມງວດ ແລະ ປະຕິບັດຢ່າງຖືກຕ້ອງ, ຄົບຖ້ວນຕາມກົດໝາຍ ກ່ຽວກັບການແກ້ໄຂຂອງກາງໃນຄະດີຢາເສບຕິດ, ການອາຍັດ-ຍຶດ-ຮິບວັດຖຸ, ຊັບສິນ...ຈາກການກະທຳຜິດຢາເສບຕິດ ເຂົ້າງົບປະມານລັດ ເພື່ອໃຫ້ນຳໃຊ້ເຂົ້າໃນວຽກງານຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ເກີດປະໂຫຍດສູງສຸດ;

9. ສະເໜີລັດຖະບານຄົ້ນຄວ້າຕອບສະໜອງງົບປະມານເປັນອັນສະເພາະ, ປະກອບວັດຖຸອຸປະກອນ, ພາຫະນະທີ່ຈຳເປັນ ເຂົ້າໃນວຽກງານຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃຫ້ພຽງພໍ, ທັນກັບສະພາບການ ເພື່ອເຮັດໃຫ້ໜ້າວຽກທີ່ກຳນົດໄວ້ໃນແຜນການສາມາດດຳເນີນໄປໄດ້;

10. ສືບຕໍ່ເພີ່ມທະວີຮ່ວມມືກັບສາກົນ, ກ່ອນອື່ນແມ່ນດ້ານການຂ່າວ, ຂໍ້ມູນຕ່າງໆ ກ່ຽວກັບຂະບວນການຜະລິດ, ຂົນສົ່ງ, ຄ້າຂາຍຢາເສບຕິດ ກັບບັນດາປະເທດໃກ້ຄຽງໃນອະນຸພາກພື້ນ, ພາກພື້ນ ແລະ ສາກົນໃຫ້ແໜ້ນແຟ້ນ, ເປັນລະບົບ, ຮັດກຸມ ເພື່ອສະກັດກັ້ນ, ປາບປາມຂະບວນການດັ່ງກ່າວ ໃຫ້ແຂງແຮງ, ມີຈຸດສຸມ ແລະ ມີປະສິດທິຜົນ. ອີກດ້ານໜຶ່ງແມ່ນສືບຕໍ່ການຮ່ວມມື, ແລກປ່ຽນບົດຮຽນກັບບັນດາປະເທດຕ່າງໆແລະອົງການຈັດຕັ້ງສາກົນ ເພື່ອຮ່ວມກັນສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງຢາເສບຕິດໃນຂົງເຂດພາກພື້ນ. ພ້ອມນີ້, ກໍດູດດຶງເອົາການສະໜັບສະໜູນ, ຊ່ວຍເຫລືອທາງດ້ານເຕັກນິກ, ວິຊາການ ແລະ ທຶນຮອນ ຈາກປະເທດເພື່ອນມິດຕື່ມອີກ.

ທັງໝົດທີ່ກ່າວມາຂ້າງເທິງນັ້ນ ແມ່ນບາງທັດສະນະຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ການສັງເກດຕິລາຄາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະທີ I ຂອງລັດຖະບານ ແລະ ທິດທາງແຜນການວຽກງານຈຸດສຸມໃນໄລຍະ II ເພື່ອເປັນພື້ນຖານໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ຄົ້ນຄວ້າປະກອບຄຳຄິດເຫັນ ແລະ ສະເໜີໃຫ້ລັດຖະບານນຳໄປຄົ້ນຄ້ວາພິຈາລະນາ ແລະ ມີມາດຕະການຈັດຕັ້ງປະຕິບັດຢ່າງເໝາະສົມ.

ຮອງນາຍົກ...

2) ສະຕິຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ ຂອງພະນັກງານຈຳນວນໜຶ່ງ ຂອງບາງພາກສ່ວນຍັງບໍ່ທັນສູງ; ກົນໄກການປະສານງານກັນລະຫວ່າງຂະແໜງການຂອງບາງພາກສ່ວນຍັງບໍ່ທັນໂລ່ງລ່ຽນ; ການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານ ຍັງບໍ່ທັນເປັນລະບົບ ແລະ ບໍ່ທັນຕໍ່ເນື່ອງ.

3) ການຈັດຕັ້ງປະຕິບັດວາລະແຫ່ງຊາດ ແມ່ນຢູ່ໃນສະພາບການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການຜະລິດ-ການບໍລິການຕ່າງໆ ລວມທັງການສົ່ງອອກສິນຄ້າ ພົບຄວາມຫຍຸ້ງຍາກ; ທ່າອ່ຽງອັດຕາເງິນເຟີ້ຕິດພັນກັບລາຄານ້ຳມັນໃນຕະຫລາດໂລກນັບມື້ສູງຂຶ້ນ, ມີຄວາມຂັດແຍ່ງເສດຖະກິດ, ການເມືອງ ລະຫວ່າງບາງປະເທດໃນໂລກ.

**6.3. ບົດຮຽນທີ່ຖອດຖອນໄດ້.**

ການສ້າງແຜນປະຕິບັດຕົວຈິງ ໂດຍສະເພາະແມ່ນແຜນການແຕ່ລະດ້ານ ຂອງແຕ່ລະພາກສ່ວນທີ່ຮັບປະກັນຄວາມກົມກຽວທັງຮັບປະກັນຫລັກການພື້ນຖານ ຂອງສອງວາລະແຫ່ງຊາດ “ ໂປ່ງໃສ, ເດັດຂາດ ແລະ ເປັນມືອາຊີບ ” ແທດກັບສະພາບຈຸດພິເສດ ກໍຄືທີ່ຕັ້ງພາລະບົດບາດ ຂອງແຕ່ລະພາກສ່ວນ; ມີຄວາມຮັບຮູ້ເຂົ້າໃຈເລິກເຊິ່ງ ແລະ ເປັນເອກະພາບ, ເຮັດແທ້ທຳຈິງ ແລະ ການປະສານສົມທົບກັນຢ່າງກົມກຽວດີ ແມ່ນປັດໃຈຕັດສິນ ເພື່ອບັນລຸຄາດໝາຍຂອງວາລະແຫ່ງຊາດ ທີ່ໄດ້ກຳນົດໄວ້.

**II. ແຜນວຽກຈຸດສຸມສືບຕໍ່ 6 ເດືອນທ້າຍ ປີ 2022 ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ.**

ສະພາບຂອງພາກພື້ນ ແລະ ສາກົນ ຍັງຈະສືບຕໍ່ຜັນແປຢ່າງສັບສົນ ແລະ ຈະສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມ ທີ່ຫລີກລ່ຽງບໍ່ໄດ້ ເປັນຕົ້ນລາຄານ້ຳມັນ, ອັດຕາເງິນເຟີ້ ທີ່ມີທ່າອ່ຽງສູງຂຶ້ນ; ອີງໃສ່ສະພາບດັ່ງກ່າວ ໃນທ້າຍປີ 2022 ຈະສືບຕໍ່ເພີ່ມທະວີການຈັດຕັ້ງປະຕິບັດ 5 ວຽກງານຈຸດສຸມຂອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ດັ່ງນີ້:

**1. ວຽກງານການສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ເພື່ອສ້າງຖານລາຍຮັບທີ່ເຂັ້ມແຂງ ແລະ ຍືນຍົງ:** ສຸມໃສ່ການຜະລິດກະສິກຳ-ປ່າໄມ້, ການປຸງແຕ່ງ ແລະ ການບໍລິການ ໃຫ້ແຂງແຮງກວ່າເກົ່າ ເພື່ອສະໜອງຄວາມຕ້ອງການພາຍໃນ ແລະ ເປັນສິນຄ້າສົ່ງອອກ ໂດຍຕິດພັນກັບແລວທາງລົດໄຟ; ສືບຕໍ່ໂຄສະນາ ແລະ ດຶງດູດການທ່ອງທ່ຽວຈາກຕ່າງປະເທດ ຜ່ານຊ່ອງທາງຕ່າງໆ ໄປຄຽງຄູ່ກັບການສົ່ງເສີມການທ່ອງທ່ຽວພາຍໃນ “ລາວທ່ຽວລາວ” ຕິດພັນກັບການປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານ-ວັດຖຸເຕັກນິກ ແລະ ການບໍລິການ ເພື່ອໃຫ້ສາມາດດຶງດູດການທ່ອງທ່ຽວຫລາຍຂຶ້ນ; ເລັ່ງຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂການຜະລິດເປັນກຸ່ມຕາມຂະແໜງການ, ຕາມສາຂາວິຊາຊີບທີ່ມີທ່າແຮງ ໂດຍການຍູ້ແຮງການຜະລິດຕາມໂຄງປະກອບເສດຖະກິດ, ສືບຕໍ່ເລັ່ງເຈລະຈາເປີດຕະຫລາດສົ່ງອອກພືດ ກັບ ສປຈີນ, ສສ.ຫວຽດນາມ ແລະ ໄທ ຕື່ມອີກ; ແກ້ໄຂບັນຫາລະບົບການຂົນສົ່ງສິນຄ້າໄປຕ່າງປະເທດຢູ່ດ່ານຕ່າງໆ ໃຫ້ດີຂຶ້ນກວ່າເກົ່າ.

**2. ວຽກງານການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ:** ສືບຕໍ່ປະຕິບັດຄຳສັ່ງເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານແຫ່ງລັດ; ຂະຫຍາຍເຄື່ອງມືທັນສະໄໝເຂົ້າໃນການຄຸ້ມຄອງ ແລະ ຈັດເກັບລາຍຮັບ ໃຫ້ສຳເລັດໄວ ແລະ ກວ້າງຂວາງ ລວມທັງ ສືບຕໍ່ປັບປຸງລະບົບຄຸ້ມຄອງການຈັດເກັບລາຍຮັບແບບເອເລັກໂຕຣນິກ, ຊຸກຍູ້ປະຕິບັດມາດຕະການໃຫ້ທຸກຫົວໜ່ວຍທຸລະກິດຖືບັນຊີ ແລະ ເຂົ້າລະບົບ TaxRIS, ເລັ່ງປັບປຸງກົນໄກການເກັບລາຍຮັບທີ່ໝັ້ນຄົງ ຈາກທີ່ດິນ, ຄ່າທຳນຽມຕ່າງໆ, ຄ່າຊົບພະຍາກອນແຮ່ທາດ, ຄຣິບໂຕ, ຄຸ້ມຄອງການນຳເຂົ້ານ້ຳມັນ ແລະ ຕ້ານການລັກລອບສິນຄ້າເພື່ອເກັບລາຍຮັບໃຫ້ຄົບຖ້ວນດ້ວຍລະບົບທັນສະໄໝ, ພ້ອມທັງສືບຕໍ່ເກັບກຳຖານຂໍ້ມູນກ່ຽວກັບການຄຸ້ມຄອງວຽກງານທີ່ດິນ, ສົມທົບກັບໂຄງການຕ່າງໆ ເກັບກຳຂໍ້ມູນຜູ້ອອກແຮງງານໃຫ້ມີຄວາມຊັດເຈນເພື່ອສາມາດເກັບອາກອນເງິນເດືອນໃຫ້ຄົບຖ້ວນ; ເອົາໃຈໃສ່ຂະຫຍາຍຖານອາກອນເຂົ້າລະບົບອາກອນມູນຄ່າເພີ່ມ, ລາຍຮັບຈາກການແກ້ໄຂພາຫະນະບໍ່ຖືກຕ້ອງ, ການຂຸດຄົ້ນແຮ່ທາດ, ການດຳເນີນທຸລະກິດຊື້-ຂາຍເງິນຄຣິບໂຕອາກອນການນຳໃຊ້ໄຟຟ້າຈາກການຂຸດຄົ້ນເງິນຄຣິບໂຕ ແລະ ອື່ນໆ ເພື່ອໃຫ້ລາຍຮັບລື່ນຄາດໝາຍທີ່ສະພາແຫ່ງຊາດໄດ້ກຳນົດໄວ້.

**3. ວຽກງານການສົ່ງເສີມການປະຢັດ, ຕ້ານການຟູມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ:** ສືບຕໍ່ປະຕິບັດມາດຕະການປະຢັດ ແລະ ຕ້ານການຟູມເຟືອຍ ໂດຍສະເພາະລາຍຈ່າຍບໍລິຫານຕ່າງໆ; ຊຸກຍູ້ການປະຕິບັດດຳລັດວ່າດ້ວຍລົດຂອງລັດເລກທີ 599/ນຍ ໃຫ້ເປັນຮູບປະທຳ ໂດຍເລີ່ມຈາກລົດປະຈຳຕຳແໜ່ງການນາ ເພື່ອຫັນມານຳໃຊ້ລົດໄຟຟ້າ, ເຂັ້ມງວດປະຕິບັດກົດໝາຍ ແລະ ນິຕິກຳກຸ່ມກົດໝາຍ ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດ ໃຫ້ມີຄວາມຮັດກຸມຫລາຍຂຶ້ນ; ດຳເນີນການເຈລະຈາຕໍ່ລອງເພື່ອຫັກລົບມູນຄ່າໂຄງການຕາມຜົນຂອງການກວດກາ; ສືບຕໍ່ລະດົມແຫລ່ງທຶນເພື່ອຊຳລະໜີ້ສິນສາທາລະນະ ດ້ວຍຮູບການຕ່າງໆ ເພື່ອຮັບປະກັນການຊຳລະໜີ້ສິນທັນກຳນົດຕາມຂໍ້ຜູກພັນສັນຍາ, ຄົ້ນຄວ້າແກ້ໄຂໜີ້ສິນໂຄງການລົງທຶນຂອງລັດຕາມ 6 ຮູບແບບ. ສືບຕໍ່ຊຸກຍູ້ໃຫ້ບໍລິສັດທີ່ປຶກສາ ດຳເນີນການໃຫ້ຄຳປຶກສາການປະຕິຮູບຮອບດ້ານ 5 ຫົວໜ່ວຍ ລັດວິສາຫະກິດຍຸດທະສາດທີ່ເຄັ່ງຮ້ອນ ເຊັ່ນ: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດການບິນລາວ, ວິສາຫະກິດນ້ຳມັນເຊື້ອໄຟລາວ, ລັດວິສາຫະກິດກະສິກຳ-ອຸດສາຫະກຳບໍລິການຂາເຂົ້າ-ຂາອອກ ແລະ ບໍລິສັດຜະລິດໄຟຟ້າລາວມະຫາຊົນ.

**4. ວຽກງານການສ້າງສະຖຽນລະພາບດ້ານເງິນຕາ:** ສືບຕໍ່ຄຸ້ມຄອງອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ເໝາະສົມ ດ້ວຍການ:

1) ສືບຕໍ່ປະສົມປະສານການນຳໃຊ້ເຄື່ອງມືນະໂຍບາຍເງິນຕາ, ນະໂຍບາຍອັດຕາແລກປ່ຽນ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ ຢ່າງກົມກຽວ ແລະ ແທດເໝາະ ເພື່ອຍົກສູງຄຸນຄ່າຂອງເງິນກີບ ເຮັດໃຫ້ອັດຕາແລກປ່ຽນມີສະຖຽນລະພາບຫລາຍຂຶ້ນ ພ້ອມທັງສ້າງເງື່ອນໄຂໃຫ້ມີເງິນຕາຕ່າງປະເທດເຂົ້າປະເທດ ເຂົ້າສູ່ລະບົບທະນາຄານຫລາຍຂຶ້ນ. ໃນນີ້, ຕົ້ນຕໍແມ່ນຈະສຸມໃສ່ປັບປຸງກົນໄກຄຸ້ມຄອງທຸລະກິດແລກປ່ຽນເງິນຕາ ໃຫ້ເປັນລະບົບທີ່ຮັດກຸມຫລາຍຂຶ້ນ; ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍ-ກົນໄກເພື່ອສ້າງເງື່ອນໄຂອຳນວຍດ້ານແຫລ່ງທຶນໃຫ້ແກ່ການຜະລິດເພື່ອທົດແທນການນຳເຂົ້າ, ສົ່ງເສີມການສົ່ງອອກ, ເພື່ອສ້າງຄວາມເຂັ້ມແຂງໃຫ້ SME; ປັບປຸງກົນໄກຄຸ້ມຄອງລາຍຮັບ ທີ່ເປັນເງິນຕາຕ່າງປະເທດໃຫ້ມີປະສິດທິຜົນຫລາຍຂຶ້ນ,

2) ສືບຕໍ່ຕິດຕາມການພັດທະນາສ້າງຄວາມເຂັ້ມແຂງຂອງ 2 ທະນາຄານລັດ ທີ່ໄດ້ມີການປັບປຸງ ແລະ ສ້າງເງື່ອນໄຂໃນການຫັນທະນາຄານນະໂຍບາຍ ໄປເປັນທະນາຄານພັດທະນາຊົນນະບົດ; ໄປຄຽງຄູ່ກັບການສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ລະບົບສະຖາບັນການເງິນ ແລະ ລະບົບຊຳລະ;

3) ສືບຕໍ່ຄຸ້ມຄອງລາຄາສິນຄ້າ ໃຫ້ຢູ່ໃນລະດັບທີ່ເໝາະສົມ ໂດຍສະເພາະບັນດາສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດ ດ້ວຍການສືບຕໍ່ຄົ້ນຄວ້າກຳນົດໂຄງສ້າງໃຫ້ເໝາະສົມຫລາຍຂຶ້ນ ແລະ ມີການນຳໃຊ້ກົນໄກດັດສົມລາຄາ ທີ່ຍືນຍົງ.

**5. ວຽກງານການຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ:**

1) ສືບຕໍ່ກວດກາຄືນບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ເພື່ອປັບປຸງໂດຍເລັ່ງໃສ່ປັບປຸງກົດໝາຍທີ່ຕິດພັນກັບວາລະແຫ່ງຊາດໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ; ພ້ອມທັງກວດກາ, ປະເມີນ ແລະ ປັບປຸງເປັນແຕ່ລະໄລຍະ;

2) ສືບຕໍ່ປັບປຸງບັນດາກົນໄກ, ຂອດຂັ້ນການບໍລິການ ແລະ ອະນຸຍາດການລົງທຶນ ແລະ ການດຳເນີນທຸລະກິດ ຕາມຄຳສັ່ງເລກທີ 02/ນຍ ແລະ ເລກທີ 03/ນຍ; ແລະ ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງຜ່ານແດນຕາມຄຳສັ່ງເລກທີ 12/ນຍ ເພື່ອໃຫ້ການອອກໃບທະບຽນ, ອະນຸຍາດການລົງທຶນ ແລະ ການດຳເນີນທຸລະກິດ ແລະ ເລກລະຫັດການເສຍອາກອນ ມີຄວາມສະດວກ, ວ່ອງໄວດີຂຶ້ນ.

**III. ມາດຕະການຈັດຕັ້ງປະຕິບັດ.**

- ແຕ່ລະຂະແໜງການ ແລະ ທ້ອງຖິ່ນໃນທົ່ວປະເທດ ຕ້ອງໄດ້ຈັດຕັ້ງເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ດ້ວຍການຜັນຂະຫຍາຍໃຫ້ເປັນແຜນລະອຽດຕາມພາລະບົດບາດຕົວຈິງກວ່າເກົ່າ ຕາມມະຕິ 07/ລບ, ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ ທັງໃຫ້ແທດຕົວຈິງກວ່າເກົ່າຕາມມະຕິ 07/ລບ.
- ເຜີຍແຜ່ໃຫ້ການຈັດຕັ້ງທຸກພາກສ່ວນ ແລະ ທຸກຂັ້ນ ຮັບຮູ້ເຂົ້າໃຈຢ່າງທົ່ວເຖິງ, ມີຄວາມເປັນເອກະພາບສູງກວ່າເກົ່າ ແລະ ໃຫ້ຖືວາລະແຫ່ງຊາດເປັນໜ້າທີ່ ແລະ ພັນທະຂອງທົ່ວພັກ, ທົ່ວປວງຊົນລາວທັງຊາດ.
- ສືບຕໍ່ປັບປຸງກົນໄກການປະສານງານໃຫ້ມີຄວາມລະອຽດ, ຈະແຈ້ງ ແລະ ຄ່ອງຕົວກວ່າເກົ່າ ເພື່ອຈັດຕັ້ງປະຕິບັດໄປໃນທິດທາງດຽວກັນ;
- ສືບຕໍ່ປະຕິບັດກົນໄກການເຮັດວຽກຂອງຄະນະແກ້ໄຂດ້ານເສດຖະກິດ, ການເງິນ ແລະ ເງິນຕາ ທີ່ລັດຖະບານໄດ້ຕົກລົງ ໃຫ້ມີປະສິດທິພາບ.
- ບັນດາຂະແໜງການ ກຳນົດແຜນຈັດຕັ້ງປະຕິບັດເປັນປີ, ໄຕມາດ ໂດຍສ່ອງແສງໃຫ້ເຫັນຕົວຊີ້ບອກຄາດໝາຍສູ້ຊົນ, ກິດຈະກຳ ແລະ ໂຄງການຢ່າງຈະແຈ້ງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ ແລະ ສຸມໃສ່ກໍ່ສ້າງພະນັກງານຂອງຕົນໃຫ້ເປັນມືອາຊີບຢ່າງແທ້ຈິງ.
- ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ, ທັງສະຫລຸບລາຍງານໃຫ້ຂັ້ນເທິງກ່ຽວຂ້ອງເປັນແຕ່ລະໄລຍະຢ່າງເປັນປົກກະຕິ.
- ສືບຕໍ່ປັບປຸງຖານຂໍ້ມູນສະຖິຕິຂອງຂະແໜງການ ແລະ ທ້ອງຖິ່ນໃຫ້ເປັນລະບົບ, ຖືກຕ້ອງ, ຊັດເຈນ ແລະ ສາມາດຕອບສະໜອງໄດ້ທັນກຳນົດເວລາ.

ທັງໝົດທີ່ກ່າວມາຂ້າງເທິງນັ້ນ ແມ່ນສັງລວມຜົນການຈັດຕັ້ງປະຕິບັດ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະຜ່ານມາ ແລະ ແຜນວຽກຈຸດສຸມ ໃນຕໍ່ໜ້າ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວ ບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍທີ່ກຳນົດໄວ້ໃນຕໍ່ໜ້າ ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ ທີ່ທຸກພາກສ່ວນໃນສັງຄົມຕ້ອງໄດ້ຮັບຮູ້, ເຂົ້າໃຈຢ່າງຖືກຕ້ອງ, ມີຄວາມເສຍສະລະ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດບັນດາແຜນວຽກຈຸດສຸມດັ່ງກ່າວແບບບຸກທະລຸຢ່າງຈິງຈັງ ເພື່ອຜົນປະໂຫຍດລວມຂອງຊາດ ແລະ ຂອງປະຊາຊົນ.

# ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ພາກທີ VIII**

**ທຸລະກິດກ່ຽວກັບຍານພາຫະນະທາງບົກ**

**ມາດຕາ 60 ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຂໍອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ.

ອ່ານຕໍ່ສະບັບໜ້າ...

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ